# ແຜນຈັດປະສົບການ

# ໜ່ວຍຕົວຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 1





ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

ແຜນຈັດປະສົບການ ໜ່ວຍຕົວຂອງຂ້ອຍ ຊັ້ນອະນຸບານສຶກສາປີທີ 1 2012



ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທີນ 2)
ທະບຽນພິມເລກທີ: ..............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2012

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

2421

ເລກທີ່.../ສສກ.ສວສ/2012

ນະຄອນຫຼວງວຽງຈັນ, ວັນທີ:............... 16 Jul 2012

## ຂໍ້ຕົກລົງຂອງລັດຖະມົນຕີ

### ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 1

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;

ເຫັນຕາມ: ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສະບັບເລກທີ 1124/ ສສກ.ຈຕ, ລົງວັນທີ 20 ເມສາ 2012.

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ລັດຖະມົນຕີວ່າການກະຊວງສຶກທິການ ແລະ ກິລາ ຈຶ່ງຕົກລົງ

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 1 ສະບັບປະຕິຮູບ ໃນໂຮງຮຽນອະນຸບານ ທົ່ວປະເທດ ນັບແຕ່ ສົກຮຽນ 2012-2013 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກົມຄຸ້ມຄອງການສຶກສາພາກເອກະຊົນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະລັດຕີວ່າການກະຊວງສຶກສາທິການ ແລະ ກິລາ

ດຣ.ພັນຄຳ ວິພາວັນ

## ແຜນຈັດປະສົບການ

# ໜ່ວຍຕົວຂອງຂ້ອຍ

## ຊັ້ນອະນຸບານສຶກສາ ປີທີ 1


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ຈຸນລາ ເຂັມທອງ
ພູມະລີ ແສງຈັນນະວົງ
ວຽງແກ້ວ ພົມມະຈັກ
ສຸກສະຫວັນ ວິມານ
ຈັນທອມ ສຸວັນນະວົງ
ສະຫວຽນ ສີຍະວັນນຸວົງ
ລັດສະໝີ ນາມເມືອງ
ມະນີວອນ ອາດຜາສຸກ
ພູມີ ພົມມະວົງສາ
ອ່າງຄຳ ບຸດສະດີ

ກວດແກ້ໂດຍ: ພວງຄຳ ສົມສະນິດ
ທອງແກ້ວ ອາສາ
ປາກຽນ ຫຼວງໄຊຊະນະ
ສົມບູນ ມາສຸວັນ
ເກດ ພັນລັກ
ສີພາພອນ ມະນີວັນ

ເຂົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ
ທຸມພັນ ຂັນທະວີ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

# ຄຳນຳ

ແຜນການຈັດປະສົບການໜ່ວຍຕົວຂອງອ້ອຍຮຽນຮຽງຂຶ້ນ ເພື່ອໃຫ້ຜູ້ບໍລິຫານການສຶກສານຳໃຊ້ໃນການສ້າງເປັນແຜນການສອນ ແລະ ເປັນບ່ອນອີງໃນການແຕ່ງບົດສອນ.

ເນື້ອໃນຄວາມຮູ້ທີ່ກຳນົດໃນກິດຈະກຳການຫຼິ້ນ ແລະ ຮຽນໃນແຕ່ລະວັນມີລັກສະນະບູລະນາການຄວາມຮູ້ທາງດ້ານພາສາລາວ, ຄະນິດສາດ ແລະ ວິທະຍາສາດທົ່ວໄປ.

ກິດຈະກຳການຫຼິ້ນ ແລະ ຮຽນທີ່ນຳມາກຳນົດໃນແຜນການສອນສະບັບນີ້ປະກອບມີ 6 ກິດຈະກຳເຊັ່ນ: ກິດຈະກຳວົງມົນ, ການເຄື່ອນໄຫວ ແລະ ຈັງຫວະ, ສິລະປະສ້າງສັນ, ເກມການສຶກສາ, ຫຼິ້ນກາງແຈ້ງ ແລະ ຫຼິ້ນຕາມມຸມ. ກິດຈະກຳເລົ່ານີ້ສ້າງຂຶ້ນ ເພື່ອໃຫ້ເດັກໄດ້ຮັບການພັດທະນາຕາມສະມັດຖະພາບການກຽມຄວາມພ້ອມທາງດ້ານຮ່າງກາຍ, ດ້ານອາລົມ ແລະ ຈິດໃຈ, ດ້ານສັງຄົມ, ດ້ານພາສາ ແລະ ດ້ານສະຕິປັນຍາ ກ່ອນເຂົ້າຮຽນໃນຊັ້ນປະຖົມຢ່າງມີຄຸນນະພາບ.

ແຜນການຈັດປະສົບການສະບັບນີ້ເນັ້ນການສອນແບບເອົາເດັກເປັນໃຈກາງ ໂດຍໃຫ້ເດັກໄດ້ປະຕິບັດຕົວຈິງຜ່ານການຫຼິ້ນ ແລະ ຮຽນໂດຍມີຫຼັກການສຳຄັນດັ່ງນີ້:

1. ເດັກໄດ້ຮັບການກຽມຄວາມພ້ອມໃນທຸກດ້ານຕາມຄວາມສາມາດ ແລະ ທຳມະຊາດຂອງເດັກ ໂດຍຜ່ານການຫຼິ້ນ ແລະ ຮຽນຢ່າງເບີກບານມ່ວນຊື່ນ.
2. ເດັກໄດ້ຮຽນຮູ້ຕາມຄວາມສົນໃຈ, ຄວາມຕ້ອງການຈາກສິ່ງໃກ້ຕົວ, ຈາກທັກສະທີ່ງ່າຍໄປສູ່ທັກສະທີ່ຍາກຕາມລຳດັບໂດຍໄດ້ຮຽນຮູ້ເປັນລາຍບຸກຄົນ ແລະ ກຸ່ມ.
3. ການຈັດກິດຈະກຳການຫຼິ້ນ ແລະ ຮຽນແມ່ນໃຫ້ເດັກປະຕິບັດຕົວຈິງໂດຍເປີດໂອກາດໃຫ້ເດັກໄດ້ທົດລອງ, ປະດິດສ້າງຢ່າງສ້າງສັນ, ຄິດແກ້ໄຂບັນຫາ ແລະ ຄົ້ນພົບສິ່ງໃໝ່ໆ ດ້ວຍຕົນເອງ.
4. ການສົ່ງເສີມປະສົບການຊີວິດໄດ້ເນັ້ນເນື້ອໃນທີ່ເດັກຄວາມຮຽນຮູ້ຈາກສັງຄົມ, ວັດທະນາທຳ ແລະ ສະພາບແວດລ້ອມທີ່ເດັກອາໄສຢູ່ໃນແຕ່ລະທ້ອງຖິ່ນ ແລະ ໃນນັ້ນໃຫ້ແຕ່ລະໂຮງຮຽນຄຳນຶງເຖິງຄວາມແຕກຕ່າງໃນການຮຽນຮູ້ຂອງເດັກແຕ່ລະຄົນ.

ນອກນັ້ນການນຳໃຊ້ຕົວຈິງໃນການສ້າງແຜນການສອນປະຈຳປີ, ເດືອນ, ອາທິດ ແລະ ປະຈຳວັນ ແລະ ການແຕ່ງບົດສອນຂອງແຕ່ລະໂຮງຮຽນ. ຈຳເປັນທີ່ຄູສອນຕ້ອງສຶກສາເນື້ອໃນທີ່ມີໃນປຶ້ມຄູ່ມືຄູ 6 ກິດຈະກຳເຊັ່ນ: ການເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ເກມການສຶກສາ, ຫຼິ້ນກາງແຈ້ງ ແລະ ຫຼິ້ນຕາມມຸມ. ສຶກສາວິທີການຈັດການຮຽນ-ການສອນ, ວິທີສ້າງຄຳຖາມ ແລະ ການບັນທຶກຂໍ້ມູນການຕິດຕາມພັດທະນາການຈາກປຶ້ມຄູ່ມືການຈັດກິດຈະກຳການຮຽນ-ການສອນ ແລະ ການຕິດຕາມປະເມີນຜົນ.

ຄະນະຮຽບຮຽງປຶ້ມແຜນການຈັດປະສົບການສະບັບນີ້ມີຄວາມຍິນດີຮັບຕ້ອນທຸກຄຳຄິດເຫັນທີ່ສ້າງສັນຈາກທ່ານຜູ້ຊົມໃຊ້ເພື່ອນຳໄປປັບປຸງປຶ້ມດັ່ງກ່າວໃຫ້ນັບມື້ດີຂຶ້ນໃນອະນາຄົດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

**ສາລະບານ**


| ຫົວຂໍ້ | ໜ້າ |
|---|---|
| **ຈຸດປະສົງ ສຳລັບອາທິດທີ 1** | **1-2** |
| **1. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 1** | **3** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ | 3 |
| ກິດຈະກຳວົງມົນ: ຊື່ ແລະ ເພດ | 4 |
| ກິດຈະກຳສິລະປະສ້າງສັນ: ອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ | 5 |
| ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ | 6 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 7 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມຮຽນຮູ້ຕ່າງໆໃນຫ້ອງ | 8 |
| **2. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 2** | **9** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ | 9 |
| ກິດຈະກຳວົງມົນ: ສ່ວນຕ່າງໆຂອງຮ່າງກາຍ | 10 |
| ກິດຈະກຳສິລະປະສ້າງສັນ: ອຸປະກອນທີ່ໃຊ້ໃນການຂີດຂຽນ | 11 |
| ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ | 12 |
| ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ | 13 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມອ່ານ | 14 |
| **3. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 3** | **15** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ | 15 |
| ກິດຈະກຳວົງມົນ: ໜ້າທີ່ຂອງຫູ, ຕາ ແລະ ດັງ | 16 |
| ກິດຈະກຳສິລະປະສ້າງສັນ: ອຸປະກອນທີ່ໃຊ້ໃນການທາສີ | 17 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ດອກໄມ້ຈູມ, ບານ | 18 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 19 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ | 20 |
| **4. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 4** | **21** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ | 21 |
| ກິດຈະກຳວົງມົນ: ໜ້າທີ່ຂອງປາກ ແລະ ແຂ້ວ | 22 |
| ກິດຈະກຳສິລະປະສ້າງສັນ: ອຸປະກອນທີ່ໃຊ້ໃນການຮ້ອຍ | 23 |
| ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ | 24 |
| ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ | 25 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມວິທະຍາສາດ ແລະ ທຳມະຊາດ | 26 |
| **5. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 1: ມື້ທີ 5** | **27** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຄຳສັ່ງ | 27 |
| ກິດຈະກຳວົງມົນ: ໜ້າທີ່ຂອງຕີນ ແລະ ມື | 28 |
| ກິດຈະກຳສິລະປະສ້າງສັນ: ອຸປະກອນທີ່ໃຊ້ໃນການປັ້ນ | 29 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລູ່ລີ່ເຂົ້າສານ | 30 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 31 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ | 32 |

**ຈຸດປະສົງ ສຳລັບອາທິດທີ 2** **33-34**

**6. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 1** **35**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ 35
ກິດຈະກຳວົງມົນ: ກິນອາຫານ ແລະ ດື່ມນ້ຳ 36
ກິດຈະກຳສິລະປະສ້າງສັນ: ນັ່ງ, ວາງເຈ້ຍ ແລະ ຈັບສີຈ້ຳເມັດ 37
ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ 38
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 39
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ 40

**7. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 2** **41**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ 41
ກິດຈະກຳວົງມົນ: ນອນ/ພັກຜ່ອນ 42
ກິດຈະກຳສິລະປະສ້າງສັນ: ຈ້ຳເມັດ 43
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເຊືອກຜ້າ 44
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 45
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມອ່ານ 46

**8. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 3** **47**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 47
ກິດຈະກຳວົງມົນ: ອະນາໄມຮ່າງກາຍ 48
ກິດຈະກຳສິລະປະສ້າງສັນ: ຢຸບ ແລະ ຈັບ 49
ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ 50
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 51
ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ 52

**9. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 4** **53**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 53
ກິດຈະກຳວົງມົນ: ຂັບຖ່າຍ 54
ກິດຈະກຳສິລະປະສ້າງສັນ: ຈ້ຳເມັດ 55
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເກັບເຄື່ອງຫຼິ້ນ 56
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 57
ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ອ່ານ 58

**10. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 5** **59**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຄຳສັ່ງ 59
ກິດຈະກຳວົງມົນ: ຮູບຮ່າງລັກສະນະ 60
ກິດຈະກຳສ້າງສັນ: ປັ້ນດິນ 61
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ດອກໄມ້ຈູມ, ບານ 62
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບ 63
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ 64

ຈຸດປະສົງ ສຳລັບອາທິດທີ 3 | 65-66

**11. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 1** **67**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ 67
ກິດຈະກຳວົງມົນ: ຜົມສະອາດ 68
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນ 69
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລູລີ່ເຂົ້າສານ 70
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 71
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ 72

**12. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 2** **73**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ 73
ກິດຈະກຳວົງມົນ: ຫູສະອາດ 74
ກິດຈະກຳສິລະປະສ້າງສັນ: ຮ້ອຍທໍ່ດູດ 75
ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ 76
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 77
ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມບົດບາດສົມມຸດ 78

**13. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 3** **79**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 79
ກິດຈະກຳວົງມົນ: ຕາ ແລະ ດັງສະອາດ 80
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນ 81
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເກັບເຄື່ອງຫຼິ້ນ 82
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 83
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ 84

**14. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 4** **85**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ 85
ກິດຈະກຳວົງມົນ: ປາກ ແລະ ແຂ້ວສະອາດ 86
ກິດຈະກຳສິລະປະສ້າງສັນ: ຈີກເຈ້ຍ 87
ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ 88
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 89
ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເກມການສຶກສາ 90

**15. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 3: ມື້ທີ 5** **91**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ 91
ກິດຈະກຳວົງມົນ: ຕີນ, ມື ສະອາດ 92
ກິດຈະກຳສິລະປະສ້າງສັນ: ທາສີຮູບພາບ 93
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ດອກໄມ້ຈູມ, ບານ 94
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ມີຄວາມສຳພັນກັນ 95
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ 96

**ຈຸດປະສົງ ສໍາລັບອາທິດທີ 4** **97-98**

**16. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 1** **99**

ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ 99

ກິດຈະກໍາວົງມົນ: ນຸ່ງເຄື່ອງ 100

ກິດຈະກໍາສິລະປະສ້າງສັນ: ຈ້ໍາເມັດ 101

ກິດຈະກໍາການຫຼິ້ນກາງແຈ້ງ: ຫຼິ້ນ ເຊືອງຜ້າ 102

ກິດຈະກໍາເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 103

ກິດຈະກໍາການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມສິລະປະສ້າງສັນ 104

**17. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 2** **105**

ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງເປັນຜູ້ນໍາ, ຜູ້ຕາມ 105

ກິດຈະກໍາວົງມົນ: ແຕ່ງຕົວ 106

ກິດຈະກໍາສິລະປະສ້າງສັນ: ຂີດຂຽນຕົວເລກ 107

ກິດຈະກໍາການຫຼິ້ນກາງແຈ້ງ: ຫຼິ້ນ ນຸ່ງເຄື່ອງ 108

ກິດຈະກໍາເກມການສຶກສາ: ເກມຕໍ່ຮູບພາບ 109

ກິດຈະກໍາການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມເກມການສຶກສາ 110

**18. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 3** **111**

ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 111

ກິດຈະກໍາວົງມົນ: ກິນ ແລະ ດື່ມ 112

ກິດຈະກໍາສິລະປະສ້າງສັນ: ຈ້ໍາເມັດ 113

ກິດຈະກໍາການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ 114

ກິດຈະກໍາເກມການສຶກສາ: ເກມຕໍ່ຮູບພາບ 115

ກິດຈະກໍາການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ 116

**19. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 4** **117**

ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 117

ກິດຈະກໍາວົງມົນ: ມ້ຽນເຄື່ອງນອນ 118

ກິດຈະກໍາສິລະປະສ້າງສັນ: ປັ້ນດິນ 119

ກິດຈະກໍາການຫຼິ້ນກາງແຈ້ງ: ຫຼິ້ນ ລູ່ລີ່ເຂົ້າສານ 120

ກິດຈະກໍາເກມການສຶກສາ: ເກມຕໍ່ຮູບພາບ 121

ກິດຈະກໍາການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສໍາຜັດ 122

**20. ໜ່ວຍ ຕົວຂອງຂ້ອຍ, ອາທິດທີ 4: ມື້ທີ 5** **123**

ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຄໍາສັ່ງ 123

ກິດຈະກໍາວົງມົນ: ມ້ຽນເຄື່ອງໃຊ້ຕົນເອງ 124

ກິດຈະກໍາສິລະປະສ້າງສັນ: ທາສີຮູບພາບ 125

ກິດຈະກໍາການຫຼິ້ນກາງແຈ້ງ: ຫຼິ້ນ ນ້ໍາຂຶ້ນ, ນ້ໍາລົງ 126

ກິດຈະກໍາເກມການສຶກສາ: ເກມຕໍ່ຮູບພາບ 127

ກິດຈະກໍາການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມເກມການສຶກສາ 128

ເອກະສານອ້າງອີງ 129

# ຈຸດປະສົງ ສຳລັບອາທິດທີ 1

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຈັງຫວະເພງ ເຈົ້າຊື່ຫຍັງ ຢ່າງມ່ວນຊື່ນ.
2. ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ເອົາມືແຕະຫົວ, ເລົາຄີງ, ແຂນ ແລະ ຂາ ຖືກຕ້ອງ ແລະ ມ່ວນຊື່ນ.
3. ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ລ້າງມື, ລ້າງໜ້າ, ເຊັດຫູ ແລະ ເຊັດດັງ ຢ່າງມ່ວນຊື່ນ.
4. ເຮັດທ່າທາງຕາມຄຳສັ່ງ ຕົບມື, ຢ່ຳເທົ້າ ແລະ ແກວ່ງແຂນ ຖືກຕ້ອງ ແລະ ມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ເຈົ້າຊື່ຫຍັງ, ຕາ, ຫູ, ມື, ປະກອບທ່າທາງ.
2. ບອກຊື່ ແລະ ເພດຂອງຕົນເອງ.
3. ບອກສ່ວນປະກອບຕ່າງໆຂອງຮ່າງກາຍ.
4. ເວົ້າເປັນຄຳຕາມຮູບພາບ: ຫົວ, ມື ແລະ ຂາ.
5. ບອກໜ້າທີ່ຂອງ ຫູ, ຕາ, ດັງ, ປາກ, ແຂ້ວ, ລີ້ນ, ຕີນ ແລະ ມື.
6. ບອກຊື່ຮູບເລຂາຄະນິດ: ຮູບວົງມົນ.
7. ນັບເລກປາກເປົ່າ 1-2.
8. ຟັງການເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ ແລະ ສຳຜັດອຸປະກອນທີ່ໃຊ້ ໃນກິດຈະກຳສິລະປະສ້າງສັນ.
2. ບອກຊື່ ແລະ ສຳຜັດອຸປະກອນທີ່ໃຊ້ ໃນການຂີດຂຽນ.
3. ບອກຊື່ ແລະ ສຳຜັດອຸປະກອນທີ່ໃຊ້ ໃນການທາສີ.
4. ບອກຊື່ ແລະ ສຳຜັດອຸປະກອນທີ່ໃຊ້ ໃນການຮ້ອຍ.
5. ບອກຊື່ ແລະ ສຳຜັດອຸປະກອນທີ່ໃຊ້ ໃນການປັ້ນ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເຄື່ອງຫຼິ້ນໃນເດີ່ນ: ໂອ້ນຊາ, ຕະລູດ, ເຄື່ອງດ່າງ ແລະ ບ້ວງລອດ ໄດ້ຖືກຕ້ອງ.
2. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຕະລູດ, ໂອ້ນຊາ, ເຄື່ອງດ່າງ ແລະ ບ້ວງລອດ ຢ່າງມ່ວນຊື່ນ ແລະ ປອດໄພ.
3. ຫຼິ້ນແບບຫຼິ້ນປະດິດສ້າງ ດອກໄມ້ຈູມ, ບານ  ຢ່າງມ່ວນຊື່ນ ແລະ ປອດໄພ.
4. ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ຕໍ່ຮູບພາບຕາມແບບ: ເດັກນ້ອຍຍິງ ແລະ ຊາຍ; ຮູບພາບໃບໜ້າ: ຫູ, ຕາ, ດັງ ແລະ ປາກ; ຮູບພາບ: ມື.
2. ນຳຮູບພາບທີ່ຄືກັນມາຈັບຄູ່ກັນ; ຮູບພາບ: ປາກ, ແຂ້ວ, ຫູ, ຕາ ແລະ ດັງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ມຸມຮຽນຮູ້ຕ່າງໆທີ່ມີຢູ່ຕາມຫ້ອງຮຽນ.
2. ບອກຊື່ເຄື່ອງຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
3. ບອກຊື່ເຄື່ອງຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
4. ບອກຊື່ເຄື່ອງຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
5. ບອກຊື່ເຄື່ອງຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.
6. ບອກຊື່ເຄື່ອງຫຼິ້ນທີ່ມີຢູ່ໃນມຸມວິທະຍາສາດ ແລະ ທຳມະຊາດຢ່າງມ່ວນຊື່ນ.
7. ບອກຊື່ເຄື່ອງຫຼິ້ນທີ່ມີຢູ່ໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ ເຈົ້າຊື່ຫຍັງ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ເຈົ້າຊື່ຫຍັງ.
3. ການບໍລິຫານມື (ປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື.
2. ໃຫ້ເດັກຍ່າງເປັນແຖວຕາມຫຼັງກັນໃນບໍລິເວນຫ້ອງ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ: ເຈົ້າຊື່ຫຍັງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງດົມດອກໄມ້.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ໃຫ້ມີມາລະຍາດໃນເວລາເຮັດທ່າທາງຕາມຈັງຫວະເພງ.

## V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ຊື່ ແລະ ເພດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ເຈົ້າຊື່ຫຍັງ ປະກອບທ່າທາງ.
2. ບອກຊື່ ແລະ ເພດຂອງຕົນເອງ.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ເຈົ້າຊື່ຫຍັງ ປະກອບທ່າທາງ.
2. ຊື່ ແລະ ເພດຂອງເດັກຍິງ ແລະ ຊາຍ.

### III. ສື່ການຮຽນ-ການສອນ

1. ບົດເພງ ເຈົ້າຊື່ຫຍັງ.
2. ເຄື່ອງເຄາະຈັງຫວະ.
3. ຮູບພາບເດັກນ້ອຍຍິງ ແລະ ຊາຍ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາ ແລະ ສ້າງຄວາມລຶ້ງເຄີຍກັບເດັກທຸກຄົນໃນຫ້ອງ.
2. ໃຫ້ເດັກຮ້ອງເພງ ເຈົ້າຊື່ຫຍັງ ປະກອບທ່າທາງ ແລະ ຄູສົນທະນາກັບເດັກ ກ່ຽວກັບເນື້ອໃນເພງ.
3. ຄູສົນທະນາກັບເດັກ ກ່ຽວກັບຊື່, ເພດ ແລະ ເດັກບອກຊື່, ເພດຂອງເດັກ.
4. ໃຫ້ເດັກເວົ້າຊື່, ເພດຂອງຕົນ ແລະ ຮ້ອງເພງຄືນ.
5. ສຶກສາອົບຮົມເດັກ ກ່ຽວກັບການຊ່ວຍເຫຼືອລະຫວ່າງເດັກຍິງ, ເດັກຊາຍ, ຄວາມກ້າຫານບອກຊື່ຕົນເອງ ແລະ ເວົ້າຄຳສຸພາບ: ທ້າວ, ນາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຮ້ອງເພງ ເຈົ້າຊື່ຫຍັງ ປະກອບທ່າທາງ.
2. ການບອກຊື່ ແລະ ເພດຂອງຕົນເອງ.

# ກິດຈະກຳ  ສິລະປະສ້າງສັນ

## ຫົວຂໍ້: ອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ.
2. ສຳຜັດອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ.

### II. ເນື້ອໃນຕົ້ນຕໍ

1. ຊື່ອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ.

- ການຂີດຂຽນ: ເຈ້ຍຂາວ, ປື້ມຂຽນ, ສໍດຳ, ຢາງລຶບ ແລະ ໄມ້ບັນທັດ.
- ການປັ້ນ: ດິນປັ້ນ, ດິນໜຽວ, ດິນດາກ, ດິນນ້ຳມັນ ແລະ ແປ້ງໂດ.
- ການທາສີ: ສີທຽນ ແລະ ສີໄມ້.
- ການຮ້ອຍ: ເຊືອກ, ໄມ້ປ່ອງ, ທໍ່ດູດ, ໝາກປັດ ແລະ ດອກໄມ້.

2. ການສຳຜັດກັບອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ ເຊັ່ນ: ສັງເກດ, ຈັບບາຍເຈ້ຍຂາວ, ປື້ມຂຽນ, ສໍດຳ, ຢາງລຶບ, ບັນທັດ, ດິນດາກ, ດິນໜຽວ, ດິນນ້ຳມັນ, ແປ້ງໂດ, ສີທຽນ, ສີໄມ້, ເຊືອກ, ໄມ້ປ່ອງ, ທໍ່ດູດ, ໝາກປັດ, ບູ໊ອກ ແລະ ດອກໄມ້.

### III. ສື່ການຮຽນ-ການສອນ

ວັດຖຸຕົວຈິງ: ເຈ້ຍຂາວ, ປື້ມຂຽນ, ສໍດຳ, ຢາງລຶບ, ໄມ້ບັນທັດ, ດິນໜຽວ, ດິນດາກ, ດິນນ້ຳມັນ, ແປ້ງໂດ, ສີທຽນ, ສີໄມ້, ເຊືອກ, ໄມ້ປ່ອງ, ທໍ່ດູດ, ໝາກປັດ ແລະ ດອກໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດີດນິ້ວມື.
2. ໃຫ້ເດັກຈັບບາຍວັດຖຸ ແລະ ຄູຕິດຕາມຊ່ວຍເຫຼືອ.
3. ຄູສົນທະນາກັບເດັກກ່ຽວກັບຊື່ ແລະ ການນຳໃຊ້
4. ໃຫ້ເດັກເວົ້າຄືນກ່ຽວກັບອຸປະກອນທີ່ໄດ້ແນະນຳແຕ່ລະຢ່າງ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກຊື່ອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ.
2. ການສຳຜັດອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເຄື່ອງຫຼິ້ນໃນເດີ່ນໄດ້ຖືກຕ້ອງ.
2. ຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ: ໂອ້ນຊາ, ຕະລູດ, ເດື່ອງດ່າງ ແລະ ບ້ວງລອດ.
2. ການຫຼິ້ນໂອ້ນຊາ ແລະ ເດື່ອງດ່າງ.

### III. ສື່ການຮຽນ-ການສອນ

ເຄື່ອງຫຼິ້ນໂອ້ນຊາ, ຕະລູດ, ເດື່ອງດ່າງ ແລະ ບ້ວງລອດ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບເຄື່ອງຫຼິ້ນໃນເດີ່ນ ທີ່ເດັກເຫັນ.
2. ໃຫ້ເດັກສັງເກດ ແລະ ບອກຊື່ເຄື່ອງຫຼິ້ນໃນເດີ່ນ.
3. ຄູແນະນຳວິທີຫຼິ້ນເຄື່ອງຫຼິ້ນ ແລະ ເດັກສຳຜັດເຄື່ອງຫຼິ້ນແຕ່ລະຢ່າງ.
4. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເຄື່ອງຫຼິ້ນໃນເດີ່ນ, ການຫຼິ້ນໂອ້ນຊາ, ເດື່ອງດ່າງ, ຕະລູດ ແລະ ບ້ວງລອດ.
5. ສຶກສາອົບຮົມເດັກ ກ່ຽວກັບການຮັກສາເຄື່ອງຫຼິ້ນໃນເດີ່ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກຊື່ເຄື່ອງຫຼິ້ນໃນເດີ່ນໄດ້ຖືກຕ້ອງ.
2. ການຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ.
2. ບົດເພງ ເຈົ້າຊື່ຫຍັງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ເຈົ້າຊື່ຫຍັງ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ ແລະ ແນະນຳການເກັບມ້ຽນ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມຮຽນຮູ້ຕ່າງໆໃນຫ້ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ບອກຊື່ມຸມຮຽນຮູ້ຕ່າງໆ ໃນຫ້ອງຮຽນ.

### II. ເນື້ອໃນຕົ້ນຕໍ

ຊື່ມຸມຮຽນຮູ້ຕ່າງໆໃນຫ້ອງຮຽນ: ມຸມບົດບາດສົມມຸດ, ມຸມອ່ານ, ວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ, ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ມຸມນິທານ, ວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ, ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ.
2. ບົດເພງ ເຈົ້າຊື່ຫຍັງ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ເຈົ້າຊື່ຫຍັງ.
2. ຄູແນະນຳຊື່ມຸມຕ່າງໆ, ບັດເຂົ້າມຸມຫຼິ້ນ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ມຸມຕ່າງໆ ໃນຫ້ອງຮຽນ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດການບອກຊື່ມຸມຮຽນຮູ້ຕ່າງໆໃນຫ້ອງຮຽນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ເອົາມືແຕະຫົວ, ເລົ່າຄີງ, ແຂນ ແລະ ຂາ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານກາຍ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານກາຍ.
2. ໃຫ້ເດັກຍ່າງຕາມບາດເຄາະຊ້າ, ໄວ.
3. ຄູແນະນຳ, ສາທິດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ເອົາມືແຕະຫົວ, ເລົ່າຄີງ, ແຂນ ແລະ ຂາ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຍ່າງຊ້າໆຫາຍໃຈເຂົ້າ, ຫາຍໃຈອອກ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພໃນເວລາເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ສ່ວນຕ່າງໆຂອງຮ່າງກາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ຕາ, ຫູ, ມື ປະກອບທ່າທາງ.
2. ບອກສ່ວນປະກອບຕ່າງໆ ຂອງຮ່າງກາຍ.
3. ເວົ້າເປັນຄຳຕາມຮູບພາບ: ຫົວ, ມື ແລະ ຂາ.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ຕາ, ຫູ, ມື ປະກອບທ່າທາງ.
2. ສ່ວນປະກອບຂອງຮ່າງກາຍ: ສ່ວນຫົວ (ຜົມ, ຕາ, ດັງ, ຫູ, ປາກ, ແຂ້ວ ແລະ ລີ້ນ).
   ສ່ວນເລົາຕົງ (ໜ້າເອິກ, ທ້ອງ, ນົມ, ບ່າ, ແອວ ແລະ ກະໂພກ).
   ສ່ວນແຂນ, ຂາ (ແຂນ, ມື, ຂາ ແລະ ຕີນ).
3. ການເວົ້າເປັນຄຳຕາມຮູບພາບ: ຫົວ, ມື ແລະ ຂາ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ເດັກນ້ອຍ.
2. ຮູບພາບ: ຫົວ. ມື ແລະ ຂາ.
3. ບົດເພງ ຕາ, ຫູ, ມື (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບຊື່ ສ່ວນຕ່າງໆຂອງຮ່າງກາຍ ທີ່ເດັກຮູ້ຈັກ.
2. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື ປະກອບທ່າທາງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນເພງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກັບເດັກ ກ່ຽວກັບສ່ວນປະກອບຂອງຮ່າງກາຍ ແລະ ບອກ ສ່ວນປະກອບຂອງຮ່າງກາຍ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ຫົວ, ມື ແລະ ຂາ.
5. ໃຫ້ເດັກບອກສ່ວນປະກອບຂອງຮ່າງກາຍ ແລະ ເວົ້າເປັນຄຳ ຕາມຮູບພາບຄືນ.
6. ສຶກສາອົບຮົມເດັກ ກ່ຽວກັບການຮັກສາຮ່າງກາຍໃຫ້ສະອາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຮ້ອງເພງ ຕາ, ຫູ, ມື ປະກອບທ່າທາງ.
2. ການບອກສ່ວນປະກອບຕ່າງໆ ຂອງຮ່າງກາຍ.
3. ການເວົ້າເປັນຄຳ ຕາມຮູບພາບ: ຫົວ, ມື ແລະ ຂາ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ອຸປະກອນທີ່ໃຊ້ໃນການຂີດຂຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ອຸປະກອນທີ່ໃຊ້ໃນການຂີດຂຽນ.
2. ສຳຜັດອຸປະກອນທີ່ໃຊ້ໃນການຂີດຂຽນ.

### II. ເນື້ອໃນຕົ້ນຕໍ

1. ຊື່ອຸປະກອນທີ່ໃຊ້ໃນການຂີດຂຽນ: ເຈ້ຍຂາວ, ປຶ້ມຂຽນ, ສໍດຳ, ຢາງລຶບ ແລະ ໄມ້ບັນທັດ.
2. ການສຳຜັດອຸປະກອນທີ່ໃຊ້ໃນການຂີດຂຽນເຊັ່ນ: ສັງເກດ, ຈັບບາຍເຈ້ຍຂາວ, ປຶ້ມຂຽນ, ສໍດຳ, ຢາງລຶບ ແລະ ໄມ້ບັນທັດ.

### III. ສື່ການຮຽນ-ການສອນ

ເຈ້ຍຂາວ, ປຶ້ມຂຽນ, ສໍດຳ, ຢາງລຶບ ແລະ ໄມ້ບັນທັດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຕິດນິ້ວມື.
2. ໃຫ້ເດັກສັງເກດວັດຖຸຈິງ ແລະ ເວົ້າຊື່ອຸປະກອນ.
3. ໃຫ້ເດັກຈັບບາຍວັດຖຸ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບຊື່ອຸປະກອນ ທີ່ໃຊ້ໃນການຂີດຂຽນ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກຊື່ອຸປະກອນທີ່ໃຊ້ໃນການຂີດຂຽນ.
2. ການສຳຜັດອຸປະກອນທີ່ໃຊ້ໃນການຂີດຂຽນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນຕະລູດ ແລະ ໂອ້ນຊາ.

### III. ສື່ການຮຽນ-ການສອນ

1. ຕະລູດ ແລະ ໂອ້ນຊາ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.
2. ເຄື່ອງເຄາະຈັງຫວະ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກແລ່ນເປັນແຖວຊື່ຕາມບາດເຄາະຊ້າ, ໄວ.
2. ຄູແນະນຳ ແລະ ສົນທະນາກ່ຽວກັບການຫຼິ້ນຕະລູດ ແລະ ໂອ້ນຊາ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕະລູດ ແລະ ໂອ້ນຊາ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນຕະລູດ ແລະ ໂອ້ນຊາ ໃຫ້ມີຄວາມປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດນຳຮູບພາບທີ່ຄືກັນ ມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ຫູ, ຕາ, ດັງ, ປາກ ແລະ ແຂ້ວ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ຫູ, ຕາ, ດັງ, ປາກ ແລະ ແຂ້ວ.
2. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບສ່ວນປະກອບຂອງຮ່າງກາຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບທີ່ຄືກັນ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີຂອງເດັກ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເຄື່ອງຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ບອກຊື່ເຄື່ອງຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນໃນມຸມບົດບາດສົມມຸດ: ຊື່ເຄື່ອງນຸ່ງ ແລະ ເຄື່ອງໃຊ້: ໂສ້ງ, ເສື້ອ, ສິ້ນ, ກະໂປ່ງ, ເຄື່ອງໃຊ້, ກັບສະບູ, ປ໋ອງແປ້ງ, ຫວີ, ແວ່ນ, ເກີບ, ແນວຟັງຫູ (ສະເຕ), ໝວກແພດ, ເສື້ອແພດ.
2. ຊື່ເຄື່ອງຫຼິ້ນໃນມຸມອ່ານ: ຮູບພາບຕ່າງໆ, ໂປສະເຕີ ແລະ ປຶ້ມເລື່ອງ.

### III. ສື່ການຮຽນ-ການສອນ

1. ໂສ້ງ, ເສື້ອ, ສິ້ນ, ກະໂປງ, ກັບສະບູ, ປ໋ອງແປ້ງ, ຫວີ, ແວ່ນ, ເກີບ, ແນວຟັງຫູ (ສະເຕ), ໝວກແພດ, ເສື້ອແພດ ແລະ ຕຸກກະຕາ.
2. ຮູບພາບຕ່າງໆ, ໂປສະເຕີ ແລະ ປຶ້ມເລື່ອງ.
3. ບົດເພງ ເຈົ້າຊື່ຫຍັງ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ເຈົ້າຊື່ຫຍັງ.
2. ຄູແນະນຳ ຊື່ເຄື່ອງຫຼິ້ນໃນມຸມບົດບາດສົມມຸດ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກສຳຜັດເຄື່ອງຫຼິ້ນໃນມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກຊື່ເຄື່ອງຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການບອກຊື່ເຄື່ອງຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ການລ້າງມື, ລ້າງໜ້າ, ເຊັດຫູ ແລະ ເຊັດດັງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຈາະຈັງຫວະ.
2. ການບໍລິຫານມື (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື.
2. ໃຫ້ເດັກຈັບບ່າກັນຢ່າງເປັນວົງມົນຕາມສຽງຕົບມື.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ການລ້າງມື, ລ້າງໜ້າ, ເຊັດຫູ ແລະ ເຊັດດັງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຢຽດຂາອອກ, ເຂົ້າຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບການເຮັດທ່າທາງຕາມຈິນຕະນາການປະກອບການເລົ່າ ຢ່າງລະມັດລະວັງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ໜ້າທີ່ຂອງຫູ, ຕາ ແລະ ດັງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກໜ້າທີ່ຂອງ ຫູ, ຕາ ແລະ ດັງ.
2. ບອກຊື່ຮູບເລຂາຄະນິດ: ຮູບວົງມົນ.

### II. ເນື້ອໃນຕົ້ນຕໍ

1. ໜ້າທີ່ຂອງຫູ: ໃຊ້ໄວ້ຟັງ.
2. ໜ້າທີ່ຂອງຕາ: ໃຊ້ໄວ້ເບິ່ງ.
3. ໜ້າທີ່ຂອງດັງ: ໃຊ້ໄວ້ດົມກິ່ນ ແລະ ຫາຍໃຈ.
4. ຮູບເລຂາຄະນິດ: ຮູບວົງມົນ.

### III. ສື່ການຮຽນ-ການສອນ

1. ຕົວເດັກ.
2. ບົດເພງ  ຕາ, ຫູ, ມື.
3. ຮູບວົງມົນ 2 ວົງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື ປະກອບທ່າທາງ.
2. ໃຫ້ເດັກເອົາມືປິດຕາ, ບີບດັງ, ອັດຫູ.
3. ຄູສົນທະນາກັບເດັກກ່ຽວກັບໜ້າທີ່ຂອງຫູ, ຕາ ແລະ  ດັງ.
4. ໃຫ້ເດັກບອກໜ້າທີ່ຂອງຫູ, ຕາ ແລະ ດັງ.
5. ໃຫ້ເດັກບອກຮູບເລຂາຄະນິດ: ຮູບວົງມົນ.
6. ໃຫ້ເດັກເວົ້າຄືນ ກ່ຽວກັບໜ້າທີ່ຂອງ ຫູ, ຕາ, ດັງ ແລະ ບອກຮູບເລຂາຄະນິດ.
7. ສຶກສາອົບຮົມເດັກ ກ່ຽວກັບການປ້ອງກັນຫູ, ຕາ, ດັງ ໃຫ້ປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກໜ້າທີ່ຂອງ ຫູ, ຕາ ແລະ ດັງ.
2. ການບອກຊື່ຮູບເລຂາຄະນິດ: ຮູບວົງມົນ.

# ກິດຈະກຳສິລປະປະສ້າງສັນ

## ຫົວຂໍ້: ອຸປະກອນທີ່ໃຊ້ໃນການທາສີ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ອຸປະກອນທີ່ໃຊ້ໃນການທາສີ.
2. ສຳຜັດອຸປະກອນທີ່ໃຊ້ໃນການທາສີ.

### II. ເນື້ອໃນຕົ້ນຕໍ

1. ຊື່ອຸປະກອນທີ່ໃຊ້ໃນການທາສີ: ສີທຽນ, ສີໄມ້ ແລະ ເຈ້ຍ.
2. ການສຳຜັດອຸປະກອນທີ່ໃຊ້ໃນການທາສີເຊັ່ນ: ສັງເກດ, ຈັບບາຍສີທຽນ, ສີໄມ້ ແລະ ເຈ້ຍ.

### III. ສື່ການຮຽນ-ການສອນ

ເຈ້ຍຂາວ, ສີທຽນ ແລະ ສີໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຈັບສໍທາສີ ຢູ່ກາງຫາວ.
2. ໃຫ້ເດັກສັງເກດວັດຖຸຕົວຈິງ ແລະ ເວົ້າຊື່ອຸປະກອນ.
3. ໃຫ້ເດັກຈັບບາຍວັດຖຸ, ທາສີຕາມໃຈ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບອຸປະກອນທີ່ໃຊ້ໃນການທາສີ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

**ສັງເກດ:**

1. ການບອກຊື່ອຸປະກອນທີ່ໃຊ້ໃນການທາສີ.
2. ການສຳຜັດອຸປະກອນທີ່ໃຊ້ໃນການທາສີ.
3. ຄວາມສົນໃຈຂອງເດັກ.

# ກິດຈະກໍາການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ດອກໄມ້ຈູມ, ບານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນປະດິດສ້າງ ດອກໄມ້ຈູມ, ບານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ດອກໄມ້ຈູມ, ບານ.

### III. ສື່ການຮຽນ-ການສອນ

1. ເດັກ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກເອົາມືຄໍ້າແອວເບັດໄປທາງເບື້ອງຊ້າຍ, ເບື້ອງຂວາ ແລ້ວຍ່າງເປັນແຖວຊື່.
2. ຄູແນະນໍາ ແລະ ສົນທະນາກ່ຽວກັບການຫຼິ້ນແບບຫຼິ້ນ ດອກໄມ້ຈູມ, ບານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນ ດອກໄມ້ຈູມ, ບານ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນ ດອກໄມ້ຈູມ, ບານ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ດອກໄມ້ຈູມ, ບານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳ ເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບໃບໜ້າ: ຫູ,  ຕາ, ດັງ ແລະ ປາກ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບໃບໜ້າ: ຫູ,  ຕາ, ດັງ ແລະ ປາກ.
2. ບົດເພງ ຕາ, ຫູ, ມື.
3. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ຫູ, ຕາ, ດັງ, ປາກ ແລະ ແຂ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ການສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເຄື່ອງຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ບອກຊື່ເຄື່ອງຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ໃນມຸມປະສິລະສ້າງສັນ: ສໍສີ, ສໍດຳ, ເຈ້ຍ, ກາວ, ດິນປັ້ນ, ເຊືອກ, ທໍ່ດູດ ແລະ ໄມ້ປ່ອງ.
2. ຊື່ເຄື່ອງຫຼິ້ນໃນມຸມເກມການສຶກສາ: ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ, ເກມຈັບຄູ່ຮູບພາບທີ່ຄືກັນ: ຫູ, ຕາ, ດັງ, ປາກ ແລະ ແຂ້ວ.

### III. ສື່ການຮຽນ-ການສອນ

1. ສໍສີ, ສໍດຳ, ເຈ້ຍ, ກາວ, ດິນປັ້ນ, ເຊືອກ, ທໍ່ດູດ ແລະ ໄມ້ປ່ອງ.
2. ເກມຈັບຄູ່ຮູບພາບທີ່ຄືກັນ: ຫູ, ຕາ, ດັງ, ປາກ ແລະ ແຂ້ວ.
3. ບັດເຂົ້າມຸມຫຼິ້ນ ແລະ ບົດເພງ ຕາ, ຫູ, ມື ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື.
2. ຄູແນະນຳຊື່ເຄື່ອງຫຼິ້ນໃນມຸມສິລະປະສ້າງສັນ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກຊື່ເຄື່ອງຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ການບອກຊື່ເຄື່ອງຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ ເຈົ້າຊື່ຫຍັງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ເຈົ້າຊື່ຫຍັງ.
3. ການບໍລິຫານແຂນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແຂນ.
2. ໃຫ້ເດັກຍ່າງເປັນຄູ່ໄປຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ເຈົ້າຊື່ຫຍັງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຍ່າງຊ້າໆຫາຍໃຈເຂົ້າ, ຫາຍໃຈອອກ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຈັງຫວະເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງຕາມຈິນຕະນາການປະກອບເພງ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ໜ້າທີ່ຂອງປາກ ແລະ ແຂ້ວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກໜ້າທີ່ຂອງປາກ, ແຂ້ວ ແລະ ລີ້ນ.
2. ນັບເລກປາກເປົ່າ 1-2.

### II. ເນື້ອໃນຕົ້ນຕໍ

1. ໜ້າທີ່ຂອງປາກ: ໃຊ້ໄວ້ເວົ້າ, ແຂ້ວ: ໃຊ້ໄວ້ຫຍ້ຳ ແລະ ລີ້ນ: ໃຊ້ໄວ້ຊີມລົດ.
2. ການນັບເລກປາກເປົ່າ 1-2.

### III. ສື່ການຮຽນ-ການສອນ

1. ເດັກ.
2. ເຂົ້າສຸກ ຫຼື ໝາກໄມ້.
3. ບົດເພງ ຕາ, ຫູ, ມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື ປະກອບທ່າທາງ.
2. ຄູສົນທະນາກັບເດັກ ກ່ຽວກັບໜ້າທີ່ປາກ, ແຂ້ວ ແລະ ລີ້ນ.
3. ໃຫ້ເດັກບອກໜ້າທີ່ຂອງປາກ, ແຂ້ວ ແລະ ລີ້ນ.
4. ໃຫ້ເດັກສັງເກດ ແລະ ຊີມເຂົ້າສຸກ ຫຼື ໝາກໄມ້.
5. ໃຫ້ເດັກນັບເລກປາກເປົ່າ 1-2.
6. ໃຫ້ເດັກເວົ້າຄືນ ກ່ຽວກັບໜ້າທີ່ຂອງ ປາກ, ແຂ້ວ, ລີ້ນ ແລະ ນັບເລກປາກເປົ່າ 1-2.
7. ສຶກສາອົບຮົມເດັກ ກ່ຽວກັບການອະນາໄມປາກ ຫຼັງຈາກຕື່ນນອນ ແລະ ຫຼັງຈາກກິນອາຫານ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກໜ້າທີ່ຂອງປາກ, ແຂ້ວ ແລະ ລີ້ນ.
2. ການນັບເລກປາກເປົ່າ 1-2.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ອຸປະກອນທີ່ໃຊ້ໃນການຮ້ອຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ອຸປະກອນທີ່ໃຊ້ໃນການຮ້ອຍ.
2. ສຳຜັດອຸປະກອນທີ່ໃຊ້ໃນການຮ້ອຍ.

### II. ເນື້ອໃນຕົ້ນຕໍ

1. ຊື່ອຸປະກອນທີ່ໃຊ້ໃນການຮ້ອຍ: ເຊືອກ, ໄມ້ປ່ອງ, ທໍ່ດູດ, ໝາກປັດ ແລະ ດອກໄມ້.
2. ການສຳຜັດອຸປະກອນທີ່ໃຊ້ໃນການຮ້ອຍເຊັ່ນ: ສັງເກດ, ຈັບລາຍເຊືອກ, ໄມ້ປ່ອງ, ທໍ່ດູດ, ໝາກປັດ ແລະ ດອກໄມ້.

### III. ສື່ການຮຽນ-ການສອນ

ເຊືອກ, ໄມ້ປ່ອງ, ທໍ່ດູດ, ໝາກປັດ ແລະ  ດອກໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຢິບດ້ວຍມືເປົ່າ.
2. ໃຫ້ເດັກສັງເກດວັດຖຸຕົວຈິງ ແລະ ເວົ້າຊື່ອຸປະກອນ.
3. ໃຫ້ເດັກຈັບບາຍວັດຖຸ, ຮ້ອຍຕາມໃຈ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບອຸປະກອນທີ່ໃຊ້ໃນການຮ້ອຍ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກຊື່ອຸປະກອນທີ່ໃຊ້ໃນການຮ້ອຍ.
2. ການສຳຜັດອຸປະກອນທີ່ໃຊ້ໃນການຮ້ອຍ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນເດື່ອງດ່າງ ແລະ ລອດບ້ວງ.

### III. ສື່ການຮຽນ-ການສອນ

ເດື່ອງດ່າງ ແລະ ບ້ວງ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່ຳເທົ້າກັບທີ່ ແລະ ແລ່ນເປັນວົງມົນ.
2. ຄູແນະນຳ, ສົນທະນາກ່ຽວກັບການຫຼິ້ນເດື່ອງດ່າງ ແລະ ລອດບ້ວງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເດື່ອງດ່າງ ແລະ ລອດບ້ວງ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນເດື່ອງດ່າງ ແລະ ລອດບ້ວງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດນຳເອົາຮູບພາບທີ່ຄືກັນ ມາຈັບຄູ່ກັນ ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ຫູ. ຕາ, ດັງ ແລະ ປາກ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ຫູ. ຕາ, ດັງ ແລະ ປາກ.
2. ເກມເກົ່າ ເກມຕໍ່ຮູບພາບໃບໜ້າ: ຫູ. ຕາ, ດັງ ແລະ ປາກ.
3. ບົດເພງ ຕາ, ຫູ, ມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ການສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບທີ່ຄືກັນ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມວິທະຍາສາດ ແລະ ທຳມະຊາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ບອກຊື່ເຄື່ອງຫຼິ້ນທີ່ມີຢູ່ໃນມຸມວິທະຍາສາດ ແລະ ທຳມະຊາດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ຊື່ເຄື່ອງຫຼິ້ນໃນມຸມວິທະຍາສາດ ແລະ ທຳມະຊາດ: ໝາກໄມ້, ຜັກ, ອ່າງປາ ແລະ ເມັດພືດຕ່າງໆ.

### III. ສື່ການຮຽນ-ການສອນ

1. ໝາກໄມ້, ຜັກ, ເມັດພືດຕ່າງໆ ແລະ ອ່າງປາ.
2. ບັດເຂົ້າມຸມຫຼິ້ນ.
3. ບົດເພງ ຕາ, ຫູ, ມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື.
2. ຄູແນະນຳຊື່ເຄື່ອງຫຼິ້ນໃນມຸມວິທະຍາສາດ ແລະ ທຳມະຊາດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເຄື່ອງຫຼິ້ນໃນມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດການບອກຊື່ເຄື່ອງຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຄຳສັ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຄຳສັ່ງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຄຳສັ່ງຂອງຄູ: ຕົບມື, ຢ່ຳເທົ້າ ແລະ ແກວ່ງແຂນ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ, ເຊືອກ ຫຼື ສໍຂາວ ສຳລັບຂີດເສັ້ນ.
2. ການບໍລິຫານຂາ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂາ.
2. ໃຫ້ເດັກຍ່າງເປັນແຖວຕາມເສັ້ນທີ່ຄູກຳນົດ.
3. ຄູສາທິດການເຮັດທ່າທາງຕາມຄຳສັ່ງ: ຕົບມື, ຢ່ຳເທົ້າ ແລະ ແກວ່ງແຂນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຢືນຄ້ຳແອວຫາຍໃຈເຂົ້າ, ຫາຍໃຈອອກຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບມາລະຍາດໃນເວລາປະຕິບັດກິດຈະກຳ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຄຳສັ່ງ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ໜ້າທີ່ຂອງຕີນ ແລະ ມື

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຟັງການເລົ່າເລື່ອງຮ່ວມກັບໝູ່ເພື່ອນ ດ້ວຍຄວາມມ່ວນຊື່ນ.
2. ບອກໜ້າທີ່ຂອງຕີນ ແລະ ມື.

### II. ເນື້ອໃນຕົ້ນຕໍ

1. ການຟັງເລົ່າເລື່ອງ ໜ້າທີ່ຂອງຕີນ ແລະ ມື.
2. ໜ້າທີ່ຂອງຕີນ: ຕີນໃຊ້ໄວ້ຍ່າງ ແລະ ມືໃຊ້ໄວ້ຈັບບາຍ.

### III. ສື່ການຮຽນ-ການສອນ

ບົດເລື່ອງ ໜ້າທີ່ຂອງຕີນ ແລະ ມື (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບສ່ວນປະກອບຂອງຮ່າງກາຍ.
2. ຄູເລົ່າເລື່ອງ  ໜ້າທີ່ຂອງຕີນ ແລະ ມື ແລະ ສົນທະນາກັບເດັກກ່ຽວກັບເນື້ອໃນບົດເລື່ອງ.
3. ຄູສົນທະນາກັບເດັກ ກ່ຽວກັບໜ້າທີ່ຂອງຕີນ ແລະ ມື.
4. ໃຫ້ເດັກບອກໜ້າທີ່ຂອງຕີນ ແລະ ມື.
5. ໃຫ້ເດັກເວົ້າຄືນກ່ຽວກັບໜ້າທີ່ຂອງຕີນ ແລະ ມື.
6. ສຶກສາອົບຮົມເດັກ ກ່ຽວກັບການຕັດເລັບຕີນ, ມື ແລະ ລ້າງຕີນ, ມືໃຫ້ສະອາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຟັງເລົ່າເລື່ອງຮ່ວມກັບໝູ່ເພື່ອນ ດ້ວຍຄວາມມ່ວນຊື່ນ.
2. ການບອກໜ້າທີ່ຂອງຕີນ ແລະ ມື.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ອຸປະກອນທີ່ໃຊ້ໃນການປັ້ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ອຸປະກອນທີ່ໃຊ້ໃນການປັ້ນ.
2. ສຳຜັດອຸປະກອນທີ່ໃຊ້ໃນການປັ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ອຸປະກອນທີ່ໃຊ້ໃນການປັ້ນ: ດິນໜຽວ, ດິນດາກ, ດິນນ້ຳມັນ ແລະ ແປ້ງໂດ.
2. ການສຳຜັດອຸປະກອນທີ່ໃຊ້ໃນການປັ້ນເຊັ່ນ: ສັງເກດ, ຈັບບາຍດິນໜຽວ, ດິນດາກ, ດິນນ້ຳມັນ ແລະ ແປ້ງສຳລັບປັ້ນ.

### III. ສື່ການຮຽນ-ການສອນ

ດິນປັ້ນ: ດິນໜຽວ, ດິນດາກ, ດິນນ້ຳມັນ ແລະ ແປ້ງສຳລັບປັ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກດີດນິ້ວມື ແຕ່ນິ້ວໂປ້ຫານິ້ວກ້ອຍ.
2. ໃຫ້ເດັກສັງເກດວັດຖຸ, ເວົ້າຊື່ອຸປະກອນ ແລະ ການເກັບມ້ຽນ.
3. ໃຫ້ເດັກຈັບບາຍວັດຖຸ, ປັ້ນຕາມໃຈ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບຊື່ອຸປະກອນໃນການປັ້ນ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການອະນາໄມ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກຊື່ອຸປະກອນທີ່ໃຊ້ໃນການປັ້ນ.
2. ຄວາມສົນໃຈໃນການສຳຜັດອຸປະກອນທີ່ໃຊ້ໃນການປັ້ນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ລູ່ລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ: ລູ່ລີ່ເຂົ້າສານ.

### III. ສື່ການຮຽນ-ການສອນ

1. ເດັກ.
2. ບົດຄຳຄ່ອງ ລູ່ລີ່ເຂົ້າສານ ແລະ ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ເຕັ້ນຢູ່ກັບທີ່.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນ ລູ່ລີ່ເຂົ້າສານ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນ ລູ່ລີ່ເຂົ້າສານ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ມື.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ມື.
2. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ຫູ, ຕາ, ດັງ ແລະ ປາກ.
3. ບົດເພງ ຕາ, ຫູ, ມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ການສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້:   ມຸມເຄື່ອງຫຼິ້ນສຳຜັດ

### I.   ຈຸດປະສົງ

ເພື່ອໃຫ້ເດັກສາມາດບອກຊື່ເຄື່ອງຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

### II.   ເນື້ອໃນຕົ້ນຕໍ

ຊື່ເຄື່ອງຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ: ປູ້ອກ , ອ່າງຊາຍ ແລະ ເຄື່ອງດົນຕີ: ກອງ, ແຄນ, ກະຈັບປີ່, ກີຕາ, ໝາກກະແຊັກ ແລະ ຊິ່ງ.

### III. ສື່ການຮຽນ-ການສອນ

1. ໄມ້ປູ້ອກ ຫຼື ປູ້ອກຢາງ, ອ່າງຊາຍ. ກອງ, ແຄນ, ກະຈັບປີ່, ກີຕາ, ໝາກກະແຊັກ ແລະ ຊິ່ງ.
2. ບັດເຂົ້າມຸມຫຼິ້ນ.
3. ຊາມນ້ຳ, ສະບູ ແລະ ຜ້າເຊັດມື.

### IV.  ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງເປົ່າແຄນ ແລະ ຕີກອງ.
2. ຄູແນະນຳຊື່ເຄື່ອງຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນໃນມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ  ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V.   ການວັດ ແລະ ປະເມີນຜົນ

ສັງເກດ ການບອກຊື່ເຄື່ອງຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ຈຸດປະສົງສຳລັບອາທິດທີ 2
## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:
1. ເຮັດທ່າທາງຕາມຈັງຫວະເພງ ຕາ, ຫູ, ມື ຢ່າງມ່ວນຊື່ນ.
2. ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ອາບນ້ຳ, ສະຜົມ ແລະ ຖູແຂ້ວ ຢ່າງມ່ວນຊື່ນ.
3. ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ລ້າງໜ້າ, ລ້າງຕີນ ແລະ ລ້າງມື ຢ່າງມ່ວນຊື່ນ
4. ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ລ້າງມື ຢ່າງມ່ວນຊື່ນ.
5. ເຮັດທ່າທາງຕາມຄຳສັ່ງ ນັ່ງລົງ ແລະ ຢືນຂຶ້ນ ຖືກຕ້ອງ ແລະ ມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:
1. ຮ້ອງເພງ ອາຫານດີ ມີປະໂຫຍດ ປະກອບທ່າທາງ.
2. ບອກການກິນອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດ.
3. ບອກການນອນ ແລະ ການພັກຜ່ອນໃຫ້ຖືກເວລາ.
4. ເວົ້າເປັນຄຳຕາມຮູບພາບ: ຜົມ, ຫູ ແລະ ປາກ.
5. ເລົ່າຄຳຄ່ອງ ລ້າງມື ປະກອບທ່າທາງ.
6. ລ້າງມືຕາມຂັ້ນຕອນ.
7. ຖ່າຍຖືກຕ້ອງຕາມເວລາ ແລະ ບ່ອນທີ່ກຳນົດ.
8. ບອກຮູບຮ່າງລັກສະນະ ຕຸ້ຍ, ຈ່ອຍ, ຕ່ຳ ແລະ ສູງ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:
1. ນັ່ງ, ວາງເຈ້ຍ ແລະ ຈັບສໍຈ້ຳເມັດຖືກຕ້ອງ.
2. ຈ້ຳເມັດໃສ່ຮູບພາບ ໝາກປູມເປົ້າຖືກຕ້ອງ.
3. ຢຸບດິນປັ້ນ ແລະ ຈັບສໍຖືກຕ້ອງ.
4. ຈ້ຳເມັດໃສ່ຮູບພາບ ປາບິນຖືກຕ້ອງ.
5. ປັ້ນດິນເປັນເສັ້ນທ່ອນຖືກຕ້ອງ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ເຄື່ອງດ່າງ, ໂອ້ນຊາ, ຕະລູດ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ
3. ຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງຫຼິ້ນໃສ່ກະຕ່າ, ດອກໄມ້ຈູມ, ບານ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ນຳຮູບພາບທີ່ຄືກັນມາຈັບຄູ່ກັນ ຮູບພາບ: ຜັກກາດ, ໝາກກ້ຽງ, ຊີ້ນໄກ່, ໄຂ່, ນົມ ແລະ ຈອກນ້ຳ ຖືກຕ້ອງ.
2. ຕໍ່ຮູບພາບຕາມແບບ ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ ຫຼິ້ນຮ່ວມກັນ, ຮູບພາບເດັກນ້ອຍອະນາໄມມື: ມິດຕັດເລັບ, ຜ້າແພເຊັດມື, ຕັດເລັບມື ແລະ ລ້າງມື, ຮູບພາບ: ເດັກນ້ອຍນັ່ງຖ່າຍຖືກຕ້ອງ.
3. ລຽນລຳດັບ ຮູບພາບ: ຄົນຕຸ້ຍ ຫາ ຈ່ອຍຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
4. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.
5. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ ຕາ, ຫູ, ມື.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ຕາ, ຫູ, ມື.
3. ການບໍລິຫານແອວ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແອວ.
2. ໃຫ້ເດັກຍ່າງເປັນຄູ່ຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ຕາ, ຫູ, ມື.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຢຽດຂາອອກ ເອົາມືແຕະປາຍຕີນ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຈັງຫວະເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ກິນອາຫານ ແລະ ດື່ມນ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ອາຫານດີມີປະໂຫຍດ ປະກອບທ່າທາງ.
2. ບອກການກິນອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດ.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ອາຫານດີມີປະໂຫຍດ ປະກອບທ່າທາງ.
2. ອາຫານທີ່ມີປະໂຫຍດ: ຜັກ, ໝາກໄມ້, ເຂົ້າ, ໄຂ່, ຊີ້ນ, ປາ.
   ເຄື່ອງດື່ມທີ່ມີປະໂຫຍດ: ນ້ຳດື່ມ, ນ້ຳໝາກໄມ້ ແລະ ນົມ.

### III. ສື່ການຮຽນ-ການສອນ

1. ບົດເພງ ອາຫານດີມີປະໂຫຍດ (ປຶ້ມຄູ່ມືຄູ).
2. ວັດຖຸຈິງ ຫຼື ຮູບພາບ: ຜັກ, ໝາກໄມ້, ເຂົ້າ, ໄຂ່, ຊີ້ນ, ປາ, ນ້ຳດື່ມ ແລະ ນົມ.
3. ຮູບວົງມົນ 1 ວົງ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບອາຫານທີ່ເຄີຍກິນ.
2. ໃຫ້ເດັກຮ້ອງເພງ ອາຫານດີມີປະໂຫຍດ ປະກອບທ່າທາງ ແລະ ຄູສົນທະນາກັບເດັກ ກ່ຽວກັບເນື້ອໃນເພງ.
3. ໃຫ້ເດັກສັງເກດວັດຖຸຈິງ ຫຼື ຮູບພາບ, ຄູສົນທະນາກັບເດັກກ່ຽວກັບການກິນອາຫານ, ເຄື່ອງດື່ມທີ່ມີປະໂຫຍດ ແລະ ເດັກບອກການກິນອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດ.
4. ໃຫ້ເດັກບອກຊື່ຮູບວົງມົນ.
5. ໃຫ້ເດັກເວົ້າຄືນກ່ຽວກັບການກິນອາຫານ, ເຄື່ອງດື່ມທີ່ມີປະໂຫຍດ, ຮ້ອງເພງ ແລະ ຕໍ່ຮູບວົງມົນ.
6. ສຶກສາອົບຮົມເດັກ ກ່ຽວກັບການກິນອາຫານ, ການດື່ມເຄື່ອງດື່ມທີ່ມີປະໂຫຍດ ແລະ ອະນາໄມຮ່າງກາຍ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຮ້ອງເພງ ອາຫານດີມີປະໂຫຍດ ປະກອບທ່າທາງ.
2. ການບອກການກິນອາຫານ ແລະ ເຄື່ອງດື່ມທີ່ມີປະໂຫຍດ.
3. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກໍາສິລະປະສ້າງສັນ

## ຫົວຂໍ້: ນັ່ງ, ວາງເຈ້ຍ ແລະ ຈັບສໍຈ້ຳເມັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດນັ່ງ, ວາງເຈ້ຍ ແລະ ຈັບສໍຈ້ຳເມັດຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການນັ່ງຫຼັງຊື່ຕົງ, ວາງເຈ້ຍໃຫ້ຊື່ໜ້າຕົນເອງ ແລະ ຈັບສໍເບື້ອງຂວາ ເພື່ອຈ້ຳເມັດ.

### III. ສື່ການຮຽນ-ການສອນ

ເຈ້ຍຂາວ ແລະ  ສໍດຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື.
2. ຄູແນະນຳ, ສາທິດການນັ່ງ, ວາງເຈ້ຍ, ຈັບສໍຈ້ຳເມັດ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນໃນການຈັບສໍຈ້ຳເມັດ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການນັ່ງ, ວາງເຈ້ຍ ແລະ ຈັບສໍຈ້ຳເມັດ.
2. ຄວາມເອົາໃຈໃສ່ໃນການເຝິກແອບນັ່ງ, ວາງເຈ້ຍ ແລະ ຈັບສໍຈ້ຳເມັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນເຄື່ອງດ່າງ ແລະ ໂອ້ນຊາ.

### III. ສື່ການຮຽນ-ການສອນ

ເຄື່ອງດ່າງ ແລະ ໂອ້ນຊາ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງຕາມຫຼັງກັນເປັນແຖວຊື່.
2. ຄູແນະນຳການຫຼິ້ນເຄື່ອງດ່າງ ແລະ ໂອ້ນຊາ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເຄື່ອງດ່າງ ແລະ ໂອ້ນຊາ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນເຄື່ອງດ່າງ ແລະ ໂອ້ນຊາ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດນຳເອົາຮູບພາບທີ່ຄືກັນ ມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ຜັກກາດ, ໝາກກ້ຽງ, ຊີ້ນໄກ່, ໄຂ່, ນົມ ແລະ ຈອກນ້ຳ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ຜັກກາດ, ໝາກກ້ຽງ, ຊີ້ນໄກ່, ໄຂ່, ນົມ ແລະ ຈອກນ້ຳ.
2. ເກມເກົ່າ ເກມຕໍ່ຮູບພາບ: ມື.
3. ບົດເພງ ອາຫານດີມີປະໂຫຍດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ອາຫານດີມີປະໂຫຍດ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີການຫຼິ້ນເກມ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບທີ່ຄືກັນ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ເອື້ອຍອາບນ້ຳ ແລະ ແຕ່ງຕົວໃຫ້ນ້ອງ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຕໍ່ບຼັອກເປັນຮູບຕ່າງໆ ຕາມໃຈ.

### III. ສື່ການຮຽນ-ການສອນ

1. ຕຸກກະຕາ, ຂາມ, ໂສ້ງ, ເສື້ອ, ແປ້ງເດັກ, ຫວີ ແລະ ຢາງມັດຜົມ.
2. ບຼັອກ.
3. ບົດເພງ ອາຫານດີມີປະໂຫຍດ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ອາຫານດີມີປະໂຫຍດ.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ອາບນ້ຳ, ສະຜົມ ແລະ ຖູແຂ້ວ.

### III. ສື່ການຮຽນ-ການສອນ

1. ສໍຂາວສຳລັບຂີດເສັ້ນຊື່ ຫຼື ເຊືອກ.
2. ການບໍລິຫານຂາ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂາ.
2. ໃຫ້ເດັກຍ່າງເປັນແຖວ ຕາມເສັ້ນຊື່ທີ່ຄູກຳນົດ.
3. ຄູສາທິດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ອາບນ້ຳ, ສະຜົມ ແລະ ຖູແຂ້ວ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງດົມດອກໄມ້.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ໃຫ້ມີມາລະຍາດໃນເວລາເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ນອນ/ພັກຜ່ອນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການນອນ ແລະ ການພັກຜ່ອນ ໃຫ້ຖືກເວລາ.
2. ເວົ້າເປັນຄຳຕາມຮູບພາບ: ຜົມ, ຫູ ແລະ ປາກ.

### II. ເນື້ອໃນຕົ້ນຕໍ

1. ການນອນໃຫ້ຖືກເວລາ: ນອນຕອນທ່ຽງ ແລະ ພັກຜ່ອນໂດຍບໍ່ລົບກວນຜູ້ອື່ນ.
2. ການເວົ້າເປັນຄຳຕາມຮູບພາບ: ຜົມ, ຫູ ແລະ ປາກ.

### III. ສື່ການຮຽນ-ການສອນ

1. ເຄື່ອງນອນເດັກນ້ອຍ: ຜ້າປູບ່ອນ, ຜ້າຫົ່ມ ແລະ ໝອນ.
2. ຮູບພາບ: ຜົມ, ຫູ ແລະ ປາກ.
3. ຮູບພາບ: ເດັກນ້ອຍນອນ.
4. ບົດເພງ ອາຫານດີມີປະໂຫຍດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ອາຫານດີມີປະໂຫຍດ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບເດັກນ້ອຍນອນ, ຄູສົນທະນາກັບເດັກກ່ຽວກັບການນອນ, ການພັກຜ່ອນ ແລະ ເດັກບອກການນອນ, ການພັກຜ່ອນໃຫ້ຖືກເວລາ.
3. ໃຫ້ເດັກສະແດງບົດບາດສົມມຸດ: ການນອນ ແລະ ພັກຜ່ອນ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ຜົມ, ຫູ ແລະ ປາກ.
5. ໃຫ້ເດັກເວົ້າຄືນກ່ຽວກັບການນອນ, ການພັກຜ່ອນໃຫ້ຖືກເວລາ ແລະ ເວົ້າເປັນຄຳຕາມຮູບພາບຄືນ.
6. ສຶກສາອົບຮົມເດັກ ກ່ຽວກັບການນອນຖືກເວລາ ແລະ ການພັກຜ່ອນບໍ່ລົບກວນຜູ້ອື່ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການນອນ ແລະ ການພັກຜ່ອນ ໃຫ້ຖືກເວລາ.
2. ການເວົ້າເປັນຄຳຕາມຮູບພາບ: ຜົມ, ຫູ ແລະ ປາກ.
3. ຄວາມກ້າຫານໃນການສະແດງບົດບາດສົມມຸດ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຈ້ຳເມັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຈ້ຳເມັດ ໃສ່ຮູບພາບໝາກປູມເປົ້າຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຈ້ຳເມັດ ໃສ່ຮູບພາບໝາກປູມເປົ້າ.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປື້ມບົດເຝິກຫັດພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຮູບພາບໝາກປູມເປົ້າ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຈ້ຳເມັດ ຢູ່ກັບພື້ນ.
2. ຄູສາທິດວິທີຈ້ຳເມັດ ໃສ່ໃນຮູບໝາກປູມເປົ້າ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົບທົນໃນການຈ້ຳເມັດ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈ້ຳເມັດ ໃສ່ໃນຮູບພາບໝາກປູມເປົ້າ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເຊື່ອງຜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ.

### III. ສື່ການຮຽນ-ການສອນ

1. ຜ້າ.
2. ເຄື່ອງເຄາະຈັງຫວະ.
3. ບົດຄຳຄ່ອງ ເຊື່ອງຜ້າ ແລະ ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງເປັນວົງມົນຕາມຫຼັງກັນ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນ ກ່ຽວກັບການຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນແບບຫຼິ້ນ ເຊື່ອງຜ້າ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ ຫຼິ້ນຮ່ວມກັນ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ ຫຼິ້ນຮ່ວມກັນ.
2. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ຜັກກາດ, ໝາກກ້ຽງ, ຊີ້ນໄກ່, ໄຂ່, ນົມ ແລະ ຈອກ.
3. ບົດເພງ ອາຫານດີມີປະໂຫຍດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ອາຫານດີມີປະໂຫຍດ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດເປັນແມ່ຄ້າ, ພໍ່ຄ້າຊື້ ແລະ ຂາຍເຄື່ອງ.
2. ການຫຼິ້ນໃນມຸມອ່ານ: ສັງເກດ, ອ່ານຮູບພາບ (ຜົມ, ຫູ, ຕາ, ປາກ), ປື້ມນິທານ ແລະ ໂປສະເຕີ ກ່ຽວກັບຮ່າງກາຍຂອງຄົນ.

### III. ສື່ການຮຽນ-ການສອນ

1. ເຄື່ອງນຸ່ງ, ກ່ອງຢາສີຟັນ, ກັບສະບູ, ກ່ອງແປ້ງ ແລະ ຕຸກກະຕາ.
2. ປື້ມນິທານ, ປື້ມຮູບພາບ (ຜົມ, ຫູ, ຕາ, ປາກ) ແລະ ໂປສະເຕີກ່ຽວກັບຮ່າງກາຍຂອງຄົນ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການຫຼິ້ນຕາມມຸມ ແລະ ບັດເຂົ້າມຸມຫຼິ້ນ.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ລ້າງໜ້າ, ລ້າງຕີນ ແລະ ລ້າງມື.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຕີນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຕີນ.
2. ໃຫ້ເດັກແລ່ນເປັນວົງມົນຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ລ້າງໜ້າ, ລ້າງຕີນ ແລະ ລ້າງມື.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງເປົ່າດອກໄມ້.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ອະນາໄມຮ່າງກາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ລ້າງມື ປະກອບທ່າທາງ.
2. ລ້າງມືຕາມຂັ້ນຕອນ.

### II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ລ້າງມື ປະກອບທ່າທາງ.
2. ການລ້າງມືຕາມຂັ້ນຕອນ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳ 2 ໜ່ວຍ, ສະບູ, ໂອ ແລະ ຜ້າເຊັດມື.
2. ບົດຄຳຄ່ອງ ລ້າງມື (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການລ້າງມື.
2. ໃຫ້ເດັກເລົ່າຄຳຄ່ອງ ລ້າງມື ປະກອບທ່າທາງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນຄຳຄ່ອງ.
3. ຄູສົນທະນາກັບເດັກ ກ່ຽວກັບການລ້າງມືຕາມຂັ້ນຕອນ.
4. ຄູສາທິດການລ້າງມື ຕາມຂັ້ນຕອນ.
5. ໃຫ້ເດັກເຝິກປະຕິບັດລ້າງມື ຕາມຂັ້ນຕອນ.
6. ໃຫ້ເດັກເລົ່າຄຳຄ່ອງ ແລະ ເວົ້າຄືນກ່ຽວກັບການລ້າງມື.
7. ສຶກສາອົບຮົມເດັກ ກ່ຽວກັບການລ້າງມືກ່ອນ, ຫຼັງຮັບປະທານອາຫານ ແລະ ພາຍຫຼັງເຂົ້າວິດຖ່າຍ: ຖ່າຍໜັກ, ຖ່າຍເບົາທຸກໆຄັ້ງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການເລົ່າຄຳຄ່ອງ ລ້າງມື ປະກອບທ່າທາງ.
2. ການເຝິກປະຕິບັດລ້າງມືຕາມຂັ້ນຕອນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຢຸບ ແລະ ຈັບ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຢຸບດິນປັ້ນ ແລະ ຈັບສໍຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຢຸບດິນປັ້ນ ແລະ ຈັບສໍ.

## III. ສື່ການຮຽນ-ການສອນ

1. ດິນປັ້ນ ແລະ ສໍ.
2. ຜ້າຢາງ ຫຼື ເຈ້ຍຮອງ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຕົບມື ແລະ ແບອອກ.
2. ຄູແນະນຳວິທີການຢຸບດິນປັ້ນ, ຈັບສໍ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຢຸບດິນປັ້ນ ແລະ ຈັບສໍ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນຕະລູດ, ເດື່ອງດ່າງ ແລະ ໂອ້ນຊາ.

### III. ສື່ການຮຽນ-ການສອນ

ຕະລູດ, ເດື່ອງດ່າງ ແລະ ໂອ້ນຊາ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງຕາມຫຼັງກັນເປັນແຖວຊື່
2. ຄູແນະນຳການຫຼິ້ນຕະລູດ, ເດື່ອງດ່າງ ແລະ ໂອ້ນຊາ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕະລູດ, ເດື່ອງດ່າງ ແລະ ໂອ້ນຊາ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນຕະລູດ, ເດື່ອງດ່າງ ແລະ ໂອ້ນຊາ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບເດັກນ້ອຍອະນາໄມມື: ມື, ມິດຕັດເລັບ, ຜ້າແພເຊັດມື, ຕັດເລັບມື ແລະ ລ້າງມື.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບເດັກນ້ອຍອະນາໄມມື: ມື, ມິດຕັດເລັບ, ຜ້າແພເຊັດມື, ຕັດເລັບມື ແລະ ລ້າງມື.
2. ເກມເກົ່າ ເກມຕໍ່ຮູບພາບເດັກນ້ອຍຍິງ ແລະ ຊາຍຫຼິ້ນຮ່ວມກັນ.
3. ບົດເພງ ອາຫານດີມີປະໂຫຍດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ອາຫານດີມີປະໂຫຍດ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບທີ່ຄືກັບຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເກມສຶກສາ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເກມການສຶກສາ: ເກມຕໍ່ຮູບພາບເດັກນ້ອຍອະນາໄມມື: ມື, ມີດຕັດເລັບ, ຕັດເລັບມື, ລ້າງມື, ຜ້າເຊັດມື ແລະ ເກມຈັບຄູ່ຮູບພາບທີ່ຄືກັນ: ຫູ, ຕາ, ດັງ ປາກ ແລະ ແຂ້ວ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ນຸ່ງເສື້ອ ແລະ ຕິດກະດຸມເສື້ອໃຫ້ຕຸກກະຕາ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບເດັກນ້ອຍອະນາໄມມື: ມື, ມີດຕັດເລັບ, ຕັດເລັບມື, ລ້າງມື, ຜ້າເຊັດມື ແລະ ເກມຈັບຄູ່ຮູບພາບທີ່ຄືກັນ: ຫູ, ຕາ, ດັງ, ປາກ ແລະ ແຂ້ວ.
2. ຕຸກກະຕາ, ເສື້ອທີ່ມີກະດຸມ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ.
2. ຄູແນະນຳວິທີຫຼິ້ນມຸມເກມການສຶກສາ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ລ້າງມື.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ລ້າງມື.
3. ການບໍລິຫານຫົວເຂົ່າ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຫົວເຂົ່າ.
2. ໃຫ້ເດັກຈັບແຂວຕໍ່ກັນຍ່າງຕາມບໍລິເວນຫ້ອງ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ລ້າງມື.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງດື່ມນໍ້າ ແລ້ວຄ່ອຍນັ່ງລົງ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ໃຫ້ມີມາລະຍາດໃນເວລາເຮັດທ່າທາງຕາມຈິນຕະນາການປະກອບການເລົ່າຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດຄວາມກ້າຫານ ແລະ ຄວາມມ່ວນຊື່ນຂອງເດັກ ໃນການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ຂັບຖ່າຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂັບຖ່າຍຖືກຕ້ອງຕາມເວລາ ແລະ ບ່ອນທີ່ກຳນົດ.

### II. ເນື້ອໃນຕົ້ນຕໍ

ການຂັບຖ່າຍທີ່ຖືກຕ້ອງຕາມເວລາ ແລະ ບ່ອນທີ່ກຳນົດ (ວິດຖ່າຍ).

### III. ສື່ການຮຽນ-ການສອນ

1. ຮູບພາບ: ຫ້ອງນ້ຳ, ຮູບພາບເດັກຖ່າຍໃສ່ວິດ.
2. ຫ້ອງນ້ຳໃນໂຮງຮຽນ, ໂອ, ສະບູ ແລະ ຜ້າເຊັດມື.
3. ບົດຄຳຄ່ອງ  ລ້າງມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ  ລ້າງມື ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກ ກ່ຽວກັບການຂັບຖ່າຍ, ການໃຊ້ຫ້ອງນ້ຳຢ່າງຖືກຕ້ອງ.
3. ໃຫ້ເດັກປະຕິບັດການໃຊ້ຫ້ອງນ້ຳໃຫ້ຖືກຕ້ອງ.
4. ໃຫ້ເດັກເວົ້າຄືນ ກ່ຽວກັບການຂັບຖ່າຍ ແລະ ການໃຊ້ຫ້ອງນ້ຳຖືກເວລາ ແລະ ບ່ອນທີ່ກຳນົດ.
5. ສຶກສາອົບຮົມເດັກ ກ່ຽວກັບການຂັບຖ່າຍຖືກເວລາ ໃນບ່ອນທີ່ກຳນົດ ແລະ ການອະນາໄມຕີນ, ມື ຫຼັງຈາກຖ່າຍແລ້ວ ຕ້ອງລ້າງຕີນ ແລະ ມື.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການບອກການຂັບຖ່າຍຖືກເວລາ ແລະ ບ່ອນທີ່ກຳນົດ.
2. ຄວາມເອົາໃຈໃສ່ໃນການປະຕິບັດການໃຊ້ຫ້ອງນ້ຳທີ່ຖືກຕ້ອງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຈ້ຳເມັດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຈ້ຳເມັດໃສ່ຮູບພາບປານົນຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຈ້ຳເມັດ ໃສ່ຮູບພາບປານົນ.

## III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຮູບພາບປານົນ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຈັບສໍ ຈ້ຳເມັດຢູ່ກັບພື້ນດ້ວຍມືເປົ່າ.
2. ຄູແນະນຳ, ສາທິດການຈ້ຳເມັດໃສ່ຮູບພາບປານົນ, ຈັບສໍເພື່ອຈ້ຳເມັດ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນໃນການນັ່ງ, ຈັບສໍເພື່ອຈ້ຳເມັດ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈ້ຳເມັດ ໃສ່ຮູບພາບປານົນ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງຫຼິ້ນໃສ່ກະຕ່າ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງຫຼິ້ນໃສ່ກະຕ່າ.

### III. ສື່ການຮຽນ-ການສອນ

1. ກະຕ່າ, ຕຸກກະຕາ, ລົດນ້ອຍ ແລະ ໝາກບານນ້ອຍ ຫຼື ເຄື່ອງຫຼິ້ນອື່ນໆ.
2. ເຄື່ອງເຄາະຈັງຫວະ.
3. ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກແລ່ນເປັນວົງມົນຕາມຈັງຫວະບາດເຄາະຊ້າ, ໄວ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງຫຼິ້ນໃສ່ກະຕ່າ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງຫຼິ້ນໃສ່ກະຕ່າ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງໃສ່ກະຕ່າ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງຫຼິ້ນໃສ່ກະຕ່າ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ເດັກນ້ອຍນັ່ງຖ່າຍ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍນັ່ງຖ່າຍ.
2. ບົດຄໍາຄ່ອງ ລ້າງມື.
3. ເກມເກົ່າ ເກມຕໍ່ຮູບພາບເດັກນ້ອຍອະນາໄມມື: ມື, ມີດຕັດເລັບ, ຜ້າເຊັດມື, ຕັດເລັບມື ແລະ ລ້າງມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄໍາຄ່ອງ ລ້າງມື.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນໍາການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເກມການສຶກສາ: ເກມຕໍ່ຮູບພາບ: ເດັກນ້ອຍນັ່ງຖ່າຍ.
2. ການຫຼິ້ນໃນມຸມອ່ານ: ການສັງເກດ, ອ່ານຮູບພາບ (ຜົມ, ຫູ, ຕາ, ປາກ), ປຶ້ມນິທານ ແລະ ໂປສະເຕີ ກ່ຽວກັບຮ່າງກາຍຂອງຄົນ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍນັ່ງຖ່າຍ.
2. ປຶ້ມນິທານ, ຮູບພາບ ຜົມ, ຫູ, ຕາ, ປາກ, ໂປສະເຕີກ່ຽວກັບຮ່າງກາຍຂອງຄົນ.
3. ບັດເຂົ້າມຸມຫຼິ້ນ.
4. ບົດເພງ ອາຫານດີມີປະໂຫຍດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ອາຫານດີມີປະໂຫຍດ.
2. ຄູແນະນຳວິທີຫຼິ້ນຕາມມຸມເກມການສຶກສາ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຄຳສັ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຄຳສັ່ງ ຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຄຳສັ່ງ: ນັ່ງລົງ ແລະ ຢືນຂຶ້ນ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແອວ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແອວ.
2. ໃຫ້ເດັກຍ່າງແກວ່ງແຂນຕາມບາດເຄາະຊ້າ, ໄວ.
3. ຄູສາທິດການເຮັດທ່າທາງຕາມຄຳສັ່ງ: ນັ່ງລົງ ແລະ ຢືນຂຶ້ນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງແຍງແວ່ນ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງຕາມຄຳສັ່ງ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພໃນເວລາເຮັດທ່າທາງຕາມຄຳສັ່ງ.

### V. ການວັດ ແລະ ປະເມີນຜົນ

ສັງເກດຄວາມຖືກຕ້ອງ ແລະ ຄວາມມ່ວນຊື່ນໃນການເຮັດທ່າທາງຕາມຄຳສັ່ງ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ຮູບຮ່າງລັກສະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ບອກຮູບຮ່າງລັກສະນະ ຕຸ້ຍ, ຈ່ອຍ, ຕ່ຳ ແລະ ສູງ.

### II. ເນື້ອໃນຕົ້ນຕໍ

ຮູບຮ່າງລັກສະນະ: ຕຸ້ຍ, ຈ່ອຍ, ຕ່ຳ ແລະ ສູງ.

### III. ສື່ການຮຽນ-ການສອນ

1. ເດັກ (ຕຸ້ຍ, ຈ່ອຍ, ຕ່ຳ ແລະ ສູງ).
2. ບົດເພງ ອາຫານດີມີປະໂຫຍດ.
3. ຮູບພາບ: ຫົວ, ມື ແລະ ຂາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ອາຫານດີ ມີປະໂຫຍດ ປະກອບທ່າທາງ.
2. ຄູສົນທະນາກັບເດັກ ກ່ຽວກັບຮູບຮ່າງລັກສະນະຂອງແຕ່ລະຄົນ ແລະ ເດັກບອກຮູບຮ່າງລັກສະນະຂອງຄົນ.
3. ໃຫ້ເດັກປຽບທຽບຮູບຮ່າງລັກສະນະ ຕຸ້ຍ, ຈ່ອຍ, ຕ່ຳ ແລະ ສູງ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ຫົວ, ມື ແລະ ຂາ.
5. ໃຫ້ເດັກເວົ້າຄືນກ່ຽວກັບຮູບຮ່າງລັກສະນະທີ່ເດັກໄດ້ສັງເກດ.
6. ສຶກສາອົບຮົມເດັກ ກ່ຽວກັບການກິນອາຫານ ແລະ ການເຄື່ອງດື່ມ ທີ່ມີປະໂຫຍດຕໍ່ຮ່າງກາຍ.

### V. ການວັດ ແລະ ປະເມີນຜົນ

ສັງເກດການບອກຮູບຮ່າງລັກສະນະ ຕຸ້ຍ, ຈ່ອຍ, ຕ່ຳ ແລະ ສູງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດປັ້ນດິນເປັນທ່ອນກົມຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນທ່ອນກົມສັ້ນ ແລະ ຍາວ.

### III. ສື່ການຮຽນ-ການສອນ

ດິນປັ້ນ, ຜ້າຢາງ ຫຼື ເຈ້ຍຮອງ, ຊາມນ້ຳ, ໂອ, ສະບູ ແລະ ຜ້າເຊັດມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງລີ້ງດິນດ້ວຍມືເປົ່າຢູ່ກັບພື້ນ.
2. ຄູແນະນຳ, ສາທິດການປັ້ນດິນເປັນທ່ອນກົມສັ້ນ, ຍາວ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການອະນາໄມມື ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຄ້າຍຄືໃນການປັ້ນດິນເປັນທ່ອນກົມ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ດອກໄມ້ຈູມ, ບານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ດອກໄມ້ຈູມ, ບານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ດອກໄມ້ຈູມ, ບານ.

### III. ສື່ການຮຽນ-ການສອນ

1. ເດັກ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກດີດນິ້ວມື, ສັ່ນຄໍ່ມື ແລະ ໝູນຫົວເອິ່າ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ດອກໄມ້ຈູມ, ບານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນ ກ່ຽວກັບການຫຼິ້ນແບບຫຼິ້ນ ດອກໄມ້ຈູມ, ບານ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນແບບຫຼິ້ນ ດອກໄມ້ຈູມ, ບານ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ດອກໄມ້ຈູມ, ບານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດລຽນລຳດັບຮູບພາບຄົນຕຸ້ຍ ຫາ ຈ່ອຍຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມ ລຽນລຳດັບຮູບພາບ: ຄົນຕຸ້ຍ ຫາ ຈ່ອຍ.

### III. ສື່ການຮຽນ-ການສອນ

1. ເກມລຽນລຳດັບຮູບພາບ: ຄົນຕຸ້ຍ ຫາ ຈ່ອຍ.
2. ບົດເພງ ອາຫານດີມີປະໂຫຍດ.
3. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍນັ່ງຖ່າຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ອາຫານດີມີປະໂຫຍດ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມລຽນລຳດັບຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບ: ຄົນຕຸ້ຍ ຫາ ຈ່ອຍ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມສິລະປະສ້າງສັນ: ປັ້ນດິນເປັນຮູບວົງມົນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ພິມຝາມືໃສ່ອ່າງຊາຍ.

### III. ສື່ການຮຽນ-ການສອນ

1. ດິນປັ້ນ, ຜ້າຢາງ ຫຼື ເຈ້ຍຮອງ.
2. ອ່າງຊາຍ.
3. ບັດເອົ້າມຸມຫຼິ້ນ.
4. ບົດເພງ ຕາ, ຫູ, ມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ  ຕາ, ຫູ, ມື.
2. ຄູແນະນຳວິທີຫຼິ້ນຕາມມຸມສິລະປະສ້າງສັນ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເອົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເອົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ , ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ຈຸດປະສົງສຳລັບອາທິດທີ 3

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຈັງຫວະເພງ ອາຫານດີມີປະໂຫຍດ, ຕາ, ຫູ, ມື ຢ່າງມ່ວນຊື່ນ.
2. ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຈັບຜົມ, ຕາ ແລະ ຫູ ຢ່າງມ່ວນຊື່ນ.
3. ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຕື່ນນອນ, ອາບນ້ຳ ແລະ ນຸ່ງເຄື່ອງ ຢ່າງມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ບອກການອະນາໄມຜົມໃຫ້ສະອາດ.
2. ບອກການອະນາໄມຫູໃຫ້ສະອາດ ແລະ ປອດໄພ.
3. ອ່ານອອກສຽງພະຍັນຊະນະ ຕ, ດ, ບ.
4. ຟັງການເລົ່າເລື່ອງຮ່ວມກັບໝູ່ເພື່ອນດ້ວຍຄວາມມ່ວນຊື່ນ.
5. ບອກການຮັກສາຄວາມສະອາດ, ປ້ອງກັນ ຕາ, ດັງ, ປາກ, ແຂ້ວ, ຕີນ ແລະ ມື.
6. ເວົ້າເປັນຄຳຕາມຮູບພາບ: ຕາ, ດັງ ແລະ ບ່າ.
7. ບອກເບື້ອງຊ້າຍ, ເບື້ອງຂວາ.
8. ເລົ່າຄຳຄ່ອງ ເລັບມືສະອາດ ປະກອບທ່າທາງ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ຂີດເສັ້ນສັ້ນໆ ແຕ່ເທິງລົງລຸ່ມໃສ່ຮູບພາບ ໝາຖືກຕ້ອງ.
2. ຮ້ອຍທໍ່ດູດຖືກຕ້ອງ.
3. ຂີດເສັ້ນສັ້ນໆ ແຕ່ຊ້າຍຫາຂວາໃສ່ຮູບແມວນ້ອຍຖືກຕ້ອງ.
4. ຈີກເຈ້ຍຕາມໃຈ.
5. ທາສີແດງໃສ່ຮູບພາບ ປາກຖືກຕ້ອງ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນພື້ນເມືອງ ລູລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ຕະລູດ, ໂອ້ນຊາ ແລະ ເຄື່ອງດ່າງ ຢ່າງມ່ວນຊື່ນ ແລະ ປອດໄພ.
3. ຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງຫຼິ້ນໃສ່ກະຕ່າ, ດອກໄມ້ຈູມ, ບານ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ນຳຮູບພາບທີ່ຄືກັນມາຈັບຄູ່ກັນ ຮູບພາບ: ເດັກນ້ອຍສະຜົມ, ຫວີຜົມ ແລະ ມັດຜົມຖືກຕ້ອງ.
2. ຕໍ່ຮູບພາບຕາມແບບ ຮູບພາບ ເດັກນ້ອຍອະນາໄມຫູ, ເດັກນ້ອຍອະນາໄມຕາ ແລະ ດັງ, ຮູບພາບ: ເດັກນ້ອຍຍິງ, ຊາຍຖູແຂ້ວຖືກຕ້ອງ.
3. ນຳຮູບພາບທີ່ມີຄວາມສຳພັນກັນມາຈັບຄູ່ກັນ ຮູບພາບ: ຕີນກັບເກີບ, ຖົງມືກັບມື, ໝວກກັບຫົວ ຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
4. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈັງຫວະປະກອບເພງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະປະກອບເພງ ອາຫານດີມີປະໂຫຍດ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ອາຫານດີມີປະໂຫຍດ.
3. ການບໍລິຫານແຂນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແຂນ.
2. ໃຫ້ເດັກແລ່ນເປັນວົງມົນຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະປະກອບເພງ ອາຫານດີມີປະໂຫຍດ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງເອົາມືບີບຂາຄ່ອຍໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພໃນການເຮັດທ່າທາງຕາມຈັງຫວະປະກອບເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈັງຫວະປະກອບເພງ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ຜົມສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດບອກການອະນາໄມຜົມໃຫ້ສະອາດຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການອະນາໄມຜົມ: ສະຜົມ, ຫວີຜົມ ແລະ ມັດຜົມ.

### III. ສື່ການຮຽນ-ການສອນ

1. ບົດເພງ ເຈົ້າຊື່ຫຍັງ.
2. ຫວີ, ແວ່ນ, ຢາງມັດຜົມ ແລະ ຕຸກກະຕາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ເຈົ້າຊື່ຫຍັງ ປະກອບທ່າທາງ.
2. ຄູສົນທະນາກັບເດັກ ກ່ຽວກັບການຮັກສາອະນາໄມຜົມ ແລະ ເດັກບອກການອະນາໄມຜົມ.
3. ຄູສາທິດການອະນາໄມຜົມ: ສະຜົມຕຸກກະຕາ, ຫວີຜົມ ແລະ ມັດຜົມ.
4. ໃຫ້ເດັກເຝິກປະຕິບັດຕົວຈິງ ການຫວີ ແລະ ມັດຜົມ.
5. ໃຫ້ເດັກເວົ້າຄືນ ກ່ຽວກັບການອະນາໄມຜົມ.
6. ສຶກສາອົບຮົມເດັກ ກ່ຽວກັບການອະນາໄມຜົມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການບອກການອະນາໄມຜົມໃຫ້ສະອາດ.
2. ຄວາມເອົາໃຈໃສ່ໃນການເຝິກປະຕິບັດການຫວີ ແລະ ມັດຜົມ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນສັ້ນໆ ແຕ່ເທິງລົງລຸ່ມ ໃສ່ຮູບພາບໝາຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຂີດເສັ້ນສັ້ນໆ ແຕ່ເທິງລົງລຸ່ມ ໃສ່ຮູບພາບໝາ.

## III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຂີດເສັ້ນໃສ່ຮູບພາບໝາ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດີດນິ້ວມື.
2. ຄູແນະນຳ, ສາທິດການຂີດເສັ້ນສັ້ນໆ ແຕ່ເທິງລົງລຸ່ມໃສ່ຮູບພາບໝາ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນສັ້ນໆ ແຕ່ເທິງລົງລຸ່ມໃສ່ຮູບພາບໝາ.
2. ຄວາມເອົາໃຈໃສ່ໃນການປະຕິບັດຕົວຈິງ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ລູ່ລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ.

### III. ສື່ການຮຽນ-ການສອນ

ບົດຄຳຄ່ອງ  ລູ່ລີ່ເຂົ້າສານ ແລະ ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງຕາມຫຼັງກັນເປັນແຖວຊື່.
2. ຄູແນະນຳ, ສາທິດວິທີຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນ ລູ່ລີ່ເຂົ້າສານ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນ ລູ່ລີ່ເຂົ້າສານ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດນຳຮູບພາບທີ່ຄືກັນ ມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ເດັກນ້ອຍສະຜົມ, ຫວີຜົມ ແລະ ມັດຜົມ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ເດັກນ້ອຍສະຜົມ, ຫວີຜົມ ແລະ ມັດຜົມ.
2. ບົດເພງ ຕາ, ຫູ, ມື.
3. ເກມເກົ່າ ເກມລຽນລຳດັບຮູບພາບ: ຄົນຕຸ້ຍ ຫາ ຈ່ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບທີ່ຄືກັນ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບົດບາດສົມມຸດ: ອາບນ້ຳ ແລະ ແຕ່ງຕົວໃຫ້ນ້ອງ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຕໍ່ບັ໊ອກເປັນຮູບຮ່າງຕ່າງໆຕາມໃຈ.

### III. ສື່ການຮຽນ-ການສອນ

1. ຊາມ, ແປ້ງເດັກ, ຕຸກກະຕາ, ຫວີ ແລະ ຢາງມັດຜົມ.
2. ບັດເຂົ້າມຸມຫຼິ້ນ.
3. ບົດເພງ ຕາ, ຫູ, ມື.
4. ບັ໊ອກ (ຖ້າບໍ່ມີບັ໊ອກສຳເລັດຮູບ ໃຫ້ເອົາວັດຖຸທີ່ໃນທ້ອງຖິ່ນມາຜະລິດ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ຈັບຜົມ, ດັງ, ຕາ ແລະ ຫູ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຂາ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂາ.
2. ໃຫ້ເດັກຈັບແຂວຕໍ່ກັນຢ່າງຕາມບໍລິເວນຫ້ອງ.
3. ຄູສາທິດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ຈັບຜົມ, ດັງ, ຕາ ແລະ ຫູ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງນົກບິນຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບມາລະຍາດໃນເວລາເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ.

### I. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ຫູສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການອະນາໄມຫູໃຫ້ສະອາດ ແລະ ປອດໄພ.
2. ອ່ານອອກສຽງພະຍັນຊະນະ ຕ, ດ, ບ.

### II. ເນື້ອໃນຕົ້ນຕໍ

1. ການອະນາໄມຫູ: ເຊັດຫູດ້ວຍຜ້າທີ່ສະອາດ, ການປ້ອງກັນຫູ: ບໍ່ເອົາຂອງແຂງແຫຍ່ຫູ ແລະ ບໍ່ໃຫ້ນ້ຳເຂົ້າຫູ.
2. ການອ່ານອອກສຽງພະຍັນຊະນະ ຕ. ດ. ບ.

### III. ສື່ການຮຽນ-ການສອນ

1. ຜ້າເຊັດໜ້າ ແລະ ຊາມນ້ຳ.
2. ບັດພະຍັນຊະນະ: ຕ, ດ, ບ.
3. ບົດເພງ ຕາ, ຫູ, ມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື ປະກອບທ່າທາງ.
2. ຄູສົນທະນາກັບເດັກ ກ່ຽວກັບການຮັກສາອະນາໄມຫູ, ປ້ອງກັນຫູ ແລະ ເດັກບອກການອະນາໄມຫູ, ປ້ອງກັນຫູ.
3. ຄູສາທິດການອະນາໄມຫູ ແລະ ເດັກເຝິກປະຕິບັດຕົວຈິງ.
4. ໃຫ້ເດັກອ່ານອອກສຽງພະຍັນຊະນະ ຕ, ດ, ບ.
5. ໃຫ້ເດັກອ່ານອອກສຽງ ແລະ ເວົ້າຄືນກ່ຽວກັບການອະນາໄມຫູ.
6. ສຶກສາອົບຮົມເດັກ ກ່ຽວກັບການອະນາໄມ ແລະ ການປ້ອງກັນຫູ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການອະນະນະໄມຫູໃຫ້ສະອາດ ແລະ ປອດໄພ.
2. ການອ່ານອອກສຽງພະຍັນຊະນະ ຕ, ດ, ບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຮ້ອຍທໍ່ດູດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຮ້ອຍທໍ່ດູດຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຮ້ອຍທໍ່ດູດ.

### III. ສື່ການຮຽນ-ການສອນ

ເຊືອກຟາງ ແລະ ທໍ່ດູດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຮ້ອຍທໍ່ດູດ ດ້ວຍມືເປົ່າ.
2. ຄູແນະນຳ, ສາທິດການຮ້ອຍທໍ່ດູດ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຮ້ອຍທໍ່ດູດ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ.

### III. ສື່ການຮຽນ-ການສອນ

ຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງຕາມຫຼັງກັນເປັນແຖວຊື່.
2. ຄູແນະນຳການຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ເດັກນ້ອຍອະນາໄມຫູ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍອະນາໄມຫູ.
2. ບົດເພງ ຕາ, ຫູ, ມື.
3. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ເດັກນ້ອຍສະຜົມ, ຫວີຜົມ ແລະ ມັດຜົມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ການສັງເກດ, ອ່ານພະຍັນຊະນະ: ຕ, ດ, ບ, ປຶ້ມນິທານ ແລະ ໂປສະເຕີກ່ຽວກັບຮ່າງກາຍຂອງຄົນ.
2. ການຫຼິ້ນໃນມຸມບົດບາດສົມມຸດ: ຫຼິ້ນເປັນທ່ານໝໍ ກວດຄົນເຈັບ.

### III. ສື່ການຮຽນ-ການສອນ

1. ພະຍັນຊະນະ: ຕ, ດ, ບ, ປຶ້ມນິທານ ແລະ ໂປສະເຕີກ່ຽວກັບຮ່າງກາຍຂອງຄົນ.
2. ບັດເຂົ້າມຸມຫຼິ້ນ.
3. ເຄື່ອງມືແພດຈຳລອງ ແລະ ຕຸກກະຕາ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກ່ຽວກັບມຸມຫຼິ້ນຜ່ານມາ.
2. ຄູແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມບົດບາດສົມມຸດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ຕື່ນນອນ, ອາບນ້ຳ ແລະ ນຸ່ງເຄື່ອງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແອວ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແອວ.
2. ໃຫ້ເດັກຍ່າງເປັນຄູ່ຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ຕື່ນນອນ, ອາບນ້ຳ ແລະ ນຸ່ງເຄື່ອງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຄ່ອຍນັ່ງລົງ ຢຽດຂາອອກ, ເຂົ້າຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບມາລະຍາດໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ຄວາມກ້າຫານ ແລະ ຄວາມມ່ວນຊື່ນໃນການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ຕາ ແລະ ດັງສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຟັງການເລົ່າເລື່ອງຮ່ວມກັບໝູ່ເພື່ອນ ດ້ວຍຄວາມມ່ວນຊື່ນ.
2. ບອກການຮັກສາຄວາມສະອາດ, ປ້ອງກັນ ຕາ ແລະ ດັງ.
3. ເວົ້າເປັນຄຳຕາມຮູບພາບ: ຕາ, ດັງ ແລະ ບ່າ.

### II. ເນື້ອໃນຕົ້ນຕໍ

1. ການຟັງເລົ່າເລື່ອງ ເຕົ່ານ້ອຍຂີ້ດື້.
2. ການຮັກສາຄວາມສະອາດ ແລະ ປ້ອງກັນຕາ, ດັງ: ລ້າງຕາດ້ວຍນ້ຳສະອາດ, ລະວັງບໍ່ໃຫ້ຂອງແຂງແທງຕາ, ເຊັດດັງດ້ວຍຜ້າແພທີ່ສະອາດ ແລະ ບໍ່ເອົາຂອງແຂງແຫຍ່ດັງ.
3. ການເວົ້າເປັນຄຳຕາມຮູບພາບ: ຕາ, ດັງ ແລະ ບ່າ.

### III. ສື່ການຮຽນ-ການສອນ

1. ຜ້າເຊັດໜ້າ ແລະ ຂານນ້ຳ.
2. ປຶ້ມເລື່ອງ ແລະ ຮູບພາບປະກອບເລື່ອງ ເຕົ່ານ້ອຍຂີ້ດື້ (ປຶ້ມຄູ່ມືຄູ).
3. ຮູບພາບ: ຕາ, ດັງ ແລະ ບ່າ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການຮັກສາຄວາມສະອາດຮ່າງກາຍ.
2. ຄູເລົ່າເລື່ອງ ເຕົ່ານ້ອຍຂີ້ດື້ ແລະ ສົນທະນາກັບເດັກ ກ່ຽວກັບເນື້ອໃນເລື່ອງ.
3. ຄູສາທິດການຮັກສາຄວາມສະອາດ ຕາ, ດັງ, ເດັກເຝິກປະຕິບັດຕົວຈິງ ແລະ ບອກການຮັກສາຄວາມສະອາດ, ປ້ອງກັນຕາ, ດັງ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ຕາ, ດັງ ແລະ ບ່າ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຮັກສາຄວາມສະອາດ ຕາ ແລະ ດັງ, ຟັງເລົ່າເລື່ອງ ແລະ ເວົ້າເປັນ ຄຳຕາມຮູບພາບ.
6. ສຶກສາອົບຮົມເດັກ ກ່ຽວກັບການຮັກສາຄວາມສະອາດ ແລະ ປ້ອງກັນຕາ ແລະ ດັງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຟັງການເລົ່າເລື່ອງຮ່ວມກັບໝູ່ເພື່ອນ ດ້ວຍຄວາມມ່ວນຊື່ນ.
2. ການບອກການຮັກສາຄວາມສະອາດ, ປ້ອງກັນ ຕາ ແລະ ດັງ.
3. ການເວົ້າເປັນຄຳຕາມຮູບພາບ: ຕາ, ດັງ ແລະ ບ່າ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນສັ້ນໆ ແຕ່ຊ້າຍຫາຂວາ ໃສ່ຮູບພາບແມວນ້ອຍຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນສັ້ນໆ ແຕ່ຊ້າຍຫາຂວາ ໃສ່ຮູບພາບແມວນ້ອຍ.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມທີ 1  ຫຼື ເຈ້ຍແບບຂີດເສັ້ນສັ້ນໆ ແຕ່ຊ້າຍຫາຂວາ ຮູບພາບແມວນ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຈັບສໍຂີດຢູ່ກາງຫາວ.
2. ຄູແນະນຳ, ສາທິດການຂີດເສັ້ນສັ້ນໆໃສ່ຮູບພາບແມວນ້ອຍ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນສັ້ນໆ ແຕ່ຊ້າຍຫາຂວາ ໃສ່ຮູບພາບແມວນ້ອຍ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງຫຼິ້ນໃສ່ກະຕ່າ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງຫຼິ້ນໃສ່ກະຕ່າ.

### III. ສື່ການຮຽນ-ການສອນ

1. ໄມ້ປູ້ອກ, ກ່ອງສະບູ, ກ່ອງແປ້ງ, ລົດນ້ອຍ ແລະ ຕຸກກະຕາ ຫຼື ເຄື່ອງຫຼິ້ນອື່ນໆ.
2. ກະຕ່າໃສ່ເຄື່ອງຫຼິ້ນ.
3. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຈັບແຂວກັນຢ່າງເປັນແຖວຊື່.
2. ຄູແນະນຳ ແລະ ສາທິດການຫຼິ້ນແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນແບບຫຼິ້ນ ເກັບເຄື່ອງຫຼິ້ນໃສ່ກະຕ່າ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ເກັບເຄື່ອງຫຼິ້ນໃສ່ກະຕ່າ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ເດັກນ້ອຍອະນາໄມຕາ ແລະ ດັງ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍອະນາໄມຕາ ແລະ ດັງ.
2. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍອະນາໄມຫູ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການຮັກສາອະນາໄມຮ່າງກາຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດການຫຼິ້ນເກມຕໍ່ຮູບພາບ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແ ລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຮີດຊິບໂສ້ງ ແລະ ຕິດກະດຸມເສື້ອ.
2. ການຫຼິ້ນໃນມຸມເກມການສຶກສາ: ເກມຕໍ່ຮູບພາບ: ເດັກນ້ອຍອະນາໄມຕາ ແລະ ດັງ.

### III. ສື່ການຮຽນ-ການສອນ

1. ເສື້ອມີກະດຸມ, ໂສ້ງ ມີຊິບ.
2. ເກມຕໍ່ຮູບພາບ: ເດັກນ້ອຍອະນາໄມຕາ ແລະ ດັງ.
3. ບົດຄຳຄ່ອງ ເລັບມືສະອາດ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເລັບມືສະອາດ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ: ຕາ, ຫູ, ມື.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ຕາ, ຫູ, ມື.
3. ການບໍລິຫານຕິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຕິ້ນ.
2. ໃຫ້ເດັກຍ່າງເປັນແຖວຊື່ຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ຕາ, ຫູ, ມື.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງຫາຍໃຈເຂົ້າ, ຫາຍໃຈອອກ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ໃຫ້ມີຄວາມປອດໄພໃນເວລາເຮັດທ່າທາງຕາມຈັງຫວະເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ຄວາມກ້າຫານ ແລະ ຄວາມມ່ວນຊື່ນໃນການເຮັດທ່າທາງຕາມຈັງຫວະເພງ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ປາກ ແລະ ແຂ້ວສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດບອກການຮັກສາຄວາມສະອາດ, ປ້ອງກັນປາກ ແລະ ແຂ້ວຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຮັກສາຄວາມສະອາດ, ປ້ອງກັນປາກ ແລະ ແຂ້ວ: ບ້ວນປາກ, ຖູແຂ້ວກ່ອນນອນ ແລະ ຫຼັງຈາກກິນອາຫານທຸກຄັ້ງ.

### III. ສື່ການຮຽນ-ການສອນ

1. ຈອກນ້ຳ, ແປງຖູແຂ້ວ, ຢາຖູແຂ້ວ ແລະ ຜ້າເຊັດໜ້າ.
2. ບົດເພງ ຕາ, ຫູ, ມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື ປະກອບທ່າທາງ.
2. ຄູສົນທະນາກັບເດັກກ່ຽວການຮັກສາຄວາມສະອາດ, ປ້ອງກັນປາກ ແລະ ແຂ້ວ.
3. ຄູສາທິດການຖູແຂ້ວ.
4. ໃຫ້ເດັກຝຶກປະຕິບັດການຖູແຂ້ວ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຮັກສາຄວາມສະອາດ ແລະ ປ້ອງກັນ ປາກ ແລະ ແຂ້ວ.
6. ສຶກສາອົບຮົມເດັກ ກ່ຽວກັບການອະນາໄມປາກ ກ່ອນນອນ ແລະ ຫຼັງຈາກກິນອາຫານທຸກຄັ້ງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການບອກການຮັກສາຄວາມສະອາດ, ປ້ອງກັນປາກ ແລະ ແຂ້ວ.
2. ຄວາມເອົາໃຈໃສ່ໃນການຝຶກປະຕິບັດການຖູແຂ້ວ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຈີກເຈ້ຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຈີກເຈ້ຍ ຕາມໃຈ.

### II. ເນື້ອໃນຕົ້ນຕໍ

ການຈີກເຈ້ຍຕາມໃຈ.

### III. ສື່ການຮຽນ-ການສອນ

ເຈ້ຍເສດ, ໜັງສືພິມ ຫຼື ໃບຕອງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຈີກເຈ້ຍ ດ້ວຍມືເປົ່າ.
2. ຄູແນະນຳ, ສາທິດການຈີກເຈ້ຍ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຈີກເຈ້ຍຕາມໃຈ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ.

### III. ສື່ການຮຽນ-ການສອນ

ຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງຕາມຫຼັງກັນເປັນແຖວຊື່.
2. ຄູແນະນຳການຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍຖູແຂ້ວ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍຖູແຂ້ວ.
2. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍອະນາໄມຕາ ແລະ ດັງ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການຮັກສາອະນາໄມປາກ ແລະ ແຂ້ວ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ການສັງເກດ, ອ່ານພະຍັນຊະນະ ຕ, ດ, ບ, ປຶ້ມນິທານ ແລະ ໂປສະເຕີ ກ່ຽວກັບຮ່າງກາຍຂອງຄົນ.
2. ການຫຼິ້ນໃນມຸມເກມການສຶກສາ: ຕໍ່ຮູບພາບ ເດັກນ້ອຍຍິງ ແລະ ຊາຍຖູແຂ້ວ.

### III. ສື່ການຮຽນ-ການສອນ

1. ບັດພະຍັນຊະນະ ຕ, ດ, ບ, ປຶ້ມເລື່ອງ, ປຶ້ມນິທານ ແລະ ໂປສະເຕີຮ່າງກາຍ.
2. ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍຖູແຂ້ວ.
3. ບັດເຂົ້າມຸມຫຼິ້ນ.
4. ບົດເພງ ຕາ, ຫູ, ມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື.
2. ຄູແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຖືກຕ້ອງ ແລະ ມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ຈັບຜົມ, ດັງ, ຕາ, ຫູ ແລະ ປາກ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແຂນ (ປື້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແຂນ.
2. ໃຫ້ເດັກຍ່າງແກວ່ງແຂນຕາມບາດເຄາະຊ້າ, ໄວ.
3. ຄູສາທິດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ຈັບຜົມ, ດັງ, ຕາ, ຫູ ແລະ ປາກ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຕົບມືຮ້ອງເພງ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບມາລະຍາດໃນເວລາເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ

## V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ຕີນ, ມື ສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການຮັກສາຄວາມສະອາດ ແລະ ປ້ອງກັນຕີນ ແລະ ມື.
2. ບອກເບື້ອງຊ້າຍ, ເບື້ອງຂວາ.
3. ເລົ່າຄຳຄ່ອງ ເລັບມືສະອາດ ປະກອບທ່າທາງ.

### II. ເນື້ອໃນຕົ້ນຕໍ

1. ການຮັກສາຄວາມສະອາດປ້ອງກັນຕີນ ແລະ ມື: ຕັດເລັບຕີນ, ເລັບມື, ໃສ່ເກີບ, ບໍ່ຫຼິ້ນເປື້ອນ ແລະ ບໍ່ຈັບຂອງແຫຼມ.
2. ເບື້ອງຊ້າຍ, ເບື້ອງຂວາ.
3. ການ ເລົ່າຄຳຄ່ອງ ເລັບມືສະອາດ ປະກອບທ່າທາງ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳ, ໂອ, ຈອກ, ຊາມນ້ຳ, ສະບູ, ຜ້າເຊັດມື, ຜ້າເຊັດຕີນ ແລະ ມີດຕັດເລັບ.
2. ບົດຄຳຄ່ອງ ເລັບມືສະອາດ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການຮັກສາຕີນ, ມື ທີ່ເດັກເຄີຍເຮັດ.
2. ໃຫ້ເດັກເລົ່າຄຳຄ່ອງ ເລັບມືສະອາດ ປະກອບທ່າທາງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນຄຳຄ່ອງ.
3. ໃຫ້ເດັກບອກກ່ຽວກັບການຮັກສາຄວາມສະອາດ, ປ້ອງກັນ ຕີນ ແລະ ມື.
4. ໃຫ້ເດັກບອກມືເບື້ອງຊ້າຍ, ເບື້ອງຂວາ.
5. ໃຫ້ເດັກເວົ້າຄືນເບື້ອງຊ້າຍ, ເບື້ອງຂວາ, ເລົ່າຄຳຄ່ອງ ແລະ ເວົ້າກ່ຽວກັບການຮັກສາຄວາມສະອາດ, ປ້ອງກັນຕີນ ແລະ ມື.
6. ສຶກສາອົບຮົມເດັກ ກ່ຽວກັບການຕັດເລັບຕີນ, ເລັບມື, ໃສ່ເກີບ ບໍ່ຫຼິ້ນເປື້ອນ ແລະ ບໍ່ຈັບຂອງແຫຼມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການຮັກສາຄວາມສະອາດ, ປ້ອງກັນຕີນ ແລະ ມື.
2. ການບອກເບື້ອງຊ້າຍ, ເບື້ອງຂວາ.
3. ການເລົ່າຄຳຄ່ອງ ເລັບມືສະອາດ ປະກອບທ່າທາງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ທາສີແດງ ໃສ່ຮູບພາບປາກຖືກບ່ອນທີ່ກຳນົດ.

### II. ເນື້ອໃນຕົ້ນຕໍ

ການທາສີແດງ ໃສ່ຮູບພາບປາກ.

### III. ສື່ການຮຽນ-ການສອນ

1. ສໍສີແດງ.
2. ປື້ມບົດເຝິກຫັດພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຮູບພາບປາກ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກທາສີຢູ່ກາງຫາວ ດ້ວຍມືເປົ່າ.
2. ຄູແນະນຳ, ສາທິດການທາສີແດງໃສ່ຮູບພາບປາກ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການທາສີແດງ ໃສ່ຮູບພາບປາກຖືກບ່ອນທີ່ກຳນົດ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ດອກໄມ້ຈູມ, ບານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນປະດິດສ້າງ ດອກໄມ້ຈູມ, ບານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ດອກໄມ້ຈູມ, ບານ.

### III. ສື່ການຮຽນ-ການສອນ

1. ເດັກ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຈັບແອວກັນຢ່າງເປັນແຖວຊື່.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ດອກໄມ້ຈູມ, ບານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ດອກໄມ້ຈູມ, ບານ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນແບບຫຼິ້ນ ດອກໄມ້ຈູມ, ບານ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ດອກໄມ້ຈູມ, ບານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ມີຄວາມສຳພັນກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳເອົາຮູບພາບທີ່ມີຄວາມສຳພັນກັນ ມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ມີຄວາມສຳພັນກັນ: ຖົງມືກັບມື, ເກີບກັບຕີນ ແລະ ໝວກກັບຫົວ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ມີຄວາມສຳພັນກັນ: ຖົງມືກັບມື, ເກີບກັບຕີນ ແລະ ໝວກກັບຫົວ.
2. ບົດຄຳຄ່ອງ ເລັບມືສະອາດ.
3. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ ຖູແຂ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເລັບມືສະອາດ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບທີ່ມີຄວາມສຳພັນກັນ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບທີ່ມີຄວາມສຳພັນກັນ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມນອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ
2. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

### I. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ໃສ່ກະດຸມເສື້ອ ແລະ ຮິດຊິບໂສ້ງ.
2. ການຫຼິ້ນໃນມຸມອ່ານ: ການສັງເກດ, ອ່ານພະຍັນຊະນະ ຕ, ດ, ບ, ປຶ້ມນິທານ ແລະ ໂປສະເຕີ ກ່ຽວກັບຮ່າງກາຍຂອງຄົນ.

### III. ສື່ການຮຽນ-ການສອນ

1. ເສື້ອມີກະດຸມ ແລະ ໂສ້ງມີຊິບ.
2. ບັດພະຍັນຊະນະ ຕ, ດ, ບ, ປຶ້ມເລື່ອງ, ປຶ້ມນິທານ ແລະ ໂປສະເຕີກ່ຽວກັບຮ່າງກາຂອງຄົນ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການຫຼິ້ນໃນມຸມ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ຈຸດປະສົງສຳລັບອາທິດທີ 4
## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ເລັບມືສະອາດ, ນຸ່ງເຄື່ອງ ຢ່າງມ່ວນຊື່ນ.
2. ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ລ້າງໜ້າ, ເຊັດໜ້າ ແລະ ທາແປ້ງ ຖືກຕ້ອງ ແລະ ມ່ວນຊື່ນ.
3. ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າການກິນອາຫານ ແລະ ການດື່ມນ້ຳ ຢ່າງມ່ວນຊື່ນ.
4. ເຮັດທ່າທາງຕາມຄຳສັ່ງ ຊັກເຄື່ອງ, ຕາກເຄື່ອງ ແລະ ພັບເຄື່ອງ ຖືກຕ້ອງ ແລະ ມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ນຸ່ງເຄື່ອງ ປະກອບທ່າທາງ.
2. ນຸ່ງເຄື່ອງ, ແຕ່ງຕົວ ຫວີຜົມ ແລະທາແປ້ງໃຫ້ງາມ.
3. ເວົ້າເປັນຄຳຕາມຮູບພາບ: ແອວ, ກະໂພກ ແລະ ຕີນ.
4. ປະຕິບັດຕົນ ໃນການກິນ ແລະ ດື່ມ.
5. ມ້ຽນເຄື່ອງນອນດ້ວຍຕົນເອງ.
6. ມ້ຽນເຄື່ອງໃຊ້ປະຈຳຕົວ ແລະ ເຄື່ອງຫຼິ້ນ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ຈ້ຳເມັດເສັ້ນຊື່ແຕ່ເທິງລົງລຸ່ມ ແລະ ແຕ່ລຸ່ມຂຶ້ນເທິງຖືກຕ້ອງ.
2. ຂີດຂຽນຕາມຮອຍຈ້ຳ ຕົວເລກ 1ຖືກຕ້ອງ.
3. ປັ້ນດິນເປັນໜ່ວຍມົນ.
4. ທາສີໃສ່ຮູບພາບ ມື ບໍ່ໃຫ້ອອກນອກຂອບຖືກຕ້ອງ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ, ລູລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນແບບຫຼິ້ນປະດິດສ້າງ ບຸ່ງເຄື່ອງ, ນ້ຳຂຶ້ນ, ນ້ຳລົງ ຢ່າງມ່ວນຊື່ນ ແລະ ປອດໄພ.
3. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ຕະລູດ, ໂອ້ນຊາ ແລະ ເຄື່ອງດ່າງ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ນຳຮູບພາບທີ່ຄືກັນມາຈັບຄູ່ກັນ ຮູບພາບ: ເສື້ອ, ໂສ້ງ, ສິ້ນຖືກຕ້ອງ.
2. ຕໍ່ຮູບພາບຕາມແບບ ຮູບພາບ ເດັກນ້ອຍຍິງ ແລະ ຊາຍແຕ່ງຕົວ, ເດັກນ້ອຍຍິງ ແລະ ຊາຍກິນອາຫານ, ເດັກນ້ອຍມ້ຽນເຄື່ອງນອນ, ເດັກນ້ອຍຍິງ ແລະ ຊາຍມ້ຽນປື້ມຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.
4. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ເລັບມືສະອາດ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ເລັບມືສະອາດ.
3. ການບໍລິຫານແອວ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແອວ.
2. ໃຫ້ເດັກຍ່າງເປັນຄູ່ຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ "ເລັບມືສະອາດ".
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງລົມພັດໃບໄມ້ຄ່ອຍໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ນຸ່ງເຄື່ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ນຸ່ງເຄື່ອງ ປະກອບທ່າທາງ.
2. ນຸ່ງເຄື່ອງ.

### II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ນຸ່ງເຄື່ອງ ປະກອບທ່າທາງ.
2. ການນຸ່ງເສື້ອ: ຕິດກະດຸມເສື້ອ, ປີ້ນຄໍເສື້ອ, ການນຸ່ງສິ້ນ, ກະໂປງ, ໂສ້ງ: ເກາະຂໍ ແລະ ໃສ່ຊິບ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ນຸ່ງເຄື່ອງ (ປຶ້ມຄູ່ມືຄູ).
2. ເຄື່ອງນຸ່ງ: ເສື້ອ, ໂສ້ງ ແລະ ກະໂປງ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບເຄື່ອງນຸ່ງ.
2. ໃຫ້ເດັກເລົ່າຄຳຄ່ອງ ນຸ່ງເຄື່ອງປະກອບທ່າທາງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນຄຳຄ່ອງ.
3. ຄູສົນທະນາກັບເດັກ ກ່ຽວກັບການນຸ່ງເຄື່ອງ.
4. ຄູສາທິດວິທີນຸ່ງເຄື່ອງ, ເດັກເຝິກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການນຸ່ງເຄື່ອງ ແລະ ເລົ່າຄຳຄ່ອງ.
6. ສຶກສາອົບຮົມເດັກ ກ່ຽວກັບການນຸ່ງເສື້ອຕ້ອງຕິດກະດຸມເສື້ອ, ປີ້ນຄໍເສື້ອ, ນຸ່ງກະໂປງ, ໂສ້ງຕ້ອງເກາະຂໍ, ໃສ່ຊິບ ແລະ ເກັບມ້ຽນເຄື່ອງນຸ່ງໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການເລົ່າຄຳຄ່ອງ ນຸ່ງເຄື່ອງ ປະກອບທ່າທາງ.
2. ການນຸ່ງເຄື່ອງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຈ້ຳເມັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຈ້ຳເມັດເສັ້ນຊື່ ແຕ່ເທິງລົງລຸ່ມຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຈ້ຳເມັດເສັ້ນຊື່ ແຕ່ເທິງລົງລຸ່ມ.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປື້ມບົດເຝິກຫັດພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຈ້ຳເມັດເສັ້ນຊື່ແຕ່ເທິງລົງລຸ່ມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື  ແລະ ດີດນິ້ວມື.
2. ຄູແນະນຳ, ສາທິດການຈ້ຳເມັດເສັ້ນຊື່ ແຕ່ເທິງລົງລຸ່ມ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈ້ຳເມັດເສັ້ນຊື່ ແຕ່ເທິງລົງລຸ່ມ.
2. ຄວາມເອົາໃຈໃສ່ໃນການເຮັດກິດຈະກຳ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເຊື່ອງຜ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ.

### III. ສື່ການຮຽນ-ການສອນ

1. ຜ້າ ແລະ ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ເຊື່ອງຜ້າ ແລະ ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກລຽນແຖວຢ່າງຕາມສຽງນັບ 1-2.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນແບບຫຼິ້ນ ເຊື່ອງຜ້າ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດນຳເອົາຮູບພາບທີ່ຄືກັນ ມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ເສື້ອ, ໂສ້ງ ແລະ ສິ້ນ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ເສື້ອ, ໂສ້ງ ແລະ ສິ້ນ.
2. ບົດຄຳຄ່ອງ ນຸ່ງເຄື່ອງ.
3. ເກມເກົ່າ ເກມຈັບຄູ່ຮູບພາບທີ່ມີຄວາມສຳພັນກັນ: ຖົງມືກັບມື, ເກີບກັບຕີນ ແລະ ໝວກກັບຫົວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ: ນຸ່ງເຄື່ອງ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບທີ່ຄືກັນ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ພິມຝາມືໃສ່ໃນອ່າງຊາຍ.
2. ການຫຼິ້ນໃນມຸມສິລະປະສ້າງສັນ: ການຂີດຂຽນຕົວເລກ 1 ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ອ່າງຊາຍ, ຊາມນ້ຳ, ສະບູ ແລະ ຜ້າແພເຊັດມື.
2. ສໍດຳ, ເຈ້ຍຮູບເລກ 1 ທີ່ມີຮອຍຈ້ຳ.
3. ບັດເຂົ້າມຸມຫຼິ້ນ.
4. ບົດເພງ ຕາ, ຫູ, ມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຕາ, ຫູ, ມື.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມສິລະປະສ້າງສັນ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ລ້າງໜ້າ, ເຊັດໜ້າ ແລະ ທາແປ້ງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຂາ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂາ.
2. ໃຫ້ເດັກຈັບແຂວຕໍ່ກັນຍ່າງຕາມບໍລິເວນຫ້ອງ.
3. ຄູສາທິດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ລ້າງໜ້າ, ເຊັດໜ້າ ແລະ ທາແປ້ງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງແຍງແວ່ນ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພໃນເວລາເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ແຕ່ງຕົວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ແຕ່ງຕົວ, ຫວີຜົມ ແລະ ທາແປ້ງໃຫ້ງາມ.
2. ເວົ້າເປັນຄຳຕາມຮູບພາບ: ແອວ, ກະໂພກ ແລະ ຕີນ.

### II. ເນື້ອໃນຕົ້ນຕໍ

1. ການແຕ່ງຕົວ, ຫວີຜົມ ແລະ ທາແປ້ງໃຫ້ງາມ.
2. ການເວົ້າເປັນຄຳຕາມຮູບພາບ: ແອວ, ກະໂພກ ແລະ ຕີນ.

### III. ສື່ການຮຽນ-ການສອນ

1. ເຄື່ອງແຕ່ງຕົວ: ຫວີ, ແປ້ງ ແລະ ແວ່ນ.
2. ຮູບພາບຄົນ ຫຼື ໂປສະເຕີຄົນ.
3. ບົດຄຳຄ່ອງ ນຸ່ງເຄື່ອງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ນຸ່ງເຄື່ອງ ປະກອບທ່າທາງ.
2. ຄູສົນທະນາກ່ຽວກັບການແຕ່ງຕົວ.
3. ຄູສາທິດການທາແປ້ງ ແລະ ເດັກເຝິກປະຕິບັດ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ແອວ, ກະໂພກ ແລະ ຕີນ.
5. ໃຫ້ເດັກເວົ້າຄືນກ່ຽວກັບການແຕ່ງຕົວ ແລະ ການເວົ້າເປັນຄຳຕາມຮູບພາບ.
6.ສຶກສາອົບຮົມເດັກ ກ່ຽວກັບການແຕ່ງຕົວໃຫ້ງາມ, ຫວີຜົມ, ມັດຜົມ ແລະ ມ້ຽນເຄື່ອງແຕ່ງຕົວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການແຕ່ງຕົວ, ຫວີຜົມ ແລະ ທາແປ້ງໃຫ້ງາມ.
2. ການເວົ້າເປັນຄຳຕາມຮູບພາບ: ແອວ, ກະໂພກ ແລະ ຕີນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດຂຽນຕາມຮອຍຈ້ຳຕົວເລກ 1 ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕາມຮອຍຈ້ຳ ຕົວເລກ 1.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປື້ມບົດເຝິກຫັດຄະນິດສາດ ເຫຼັ້ມທີ 1 ຫຼື ເຈ້ຍແບບຮອຍຈ້ຳຕົວເລກ 1.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂີດຂຽນຢູ່ກາງຫາວ ດ້ວຍມືເປົ່າ.
2. ຄູແນະນຳ, ສາທິດການຂີດຂຽນຕົວເລກ 1 ຕາມຮອຍຈ້ຳ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດຂຽນຕາມຮອຍຈ້ຳຕົວເລກ 1.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ນຸ່ງເຄື່ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນປະດິດສ້າງ ນຸ່ງເຄື່ອງ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ນຸ່ງເຄື່ອງ.

### III. ສື່ການຮຽນ-ການສອນ

1. ເສື້ອທີ່ມີກະດຸມ.
2. ເຄື່ອງເຄາະຈັງຫວະ.
3. ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກລຽນແຖວຢ່າງຕາມຫຼັງກັນເປັນແຖວຊື່.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ນຸ່ງເຄື່ອງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ນຸ່ງເຄື່ອງ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນແບບຫຼິ້ນ ນຸ່ງເຄື່ອງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ນຸ່ງເຄື່ອງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ ແຕ່ງຕົວ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະຊາຍ ແຕ່ງຕົວ.
2. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ເສື້ອ, ໂສ້ງ ແລະ ສິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການແຕ່ງຕົວ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ກິດຈະກຳການຮຽນ-ການສອນ

ສັງເກດ:

1. ຄວາມຖືກຕ້ອງໃນການຫຼິ້ນເກມຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຫຼິ້ນໄມ້ບັ້ອກ.
2. ການຫຼິ້ນໃນມຸມເກມການສຶກສາ: ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ ແຕ່ງຕົວ.

### III. ສື່ການຮຽນ-ການສອນ

1. ໄມ້ບັ້ອກ.
2. ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ ແຕ່ງຕົວ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນັບ 1-2 ປະກອບການຕົບມື.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ການກິນອາຫານ ແລະ ການດື່ມນໍ້າ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຕີນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຕີນ.
2. ໃຫ້ເດັກແລ່ນເປັນວົງມົນຕາມບາດເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ການກິນອາຫານ ແລະ ການດື່ມນໍ້າ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຢຽດຂາອອກເອົາມືແຕະປາຍຕີນ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບມາລະຍາດໃນເວລາເຮັດທ່າທາງຕາມຈິນຕະນາການປະກອບການເລົ່າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ກິນ ແລະ ດື່ມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດປະຕິບັດຕົນໃນການກິນ ແລະ ດື່ມ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຕົນໃນການກິນ: ໃຊ້ບ່ວງຕັກອາຫານ ບໍ່ໃຫ້ຕົກເຮ່ຍ ແລະ ບໍ່ໃຫ້ເປື້ອນປາກ, ການດື່ມ: ຈັບຈອກຖືກວິທີ ແລະ ບໍ່ໃຫ້ນໍ້າເຮ່ຍ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ເລັບມືສະອາດ.
2. ບ່ວງ, ຈອກ ແລະ ຖ້ວຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເລັບມືສະອາດ ປະກອບທ່າທາງ.
2. ຄູແນະນຳ, ສາທິດກ່ຽວກັບການປະຕິບັດຕົນໃນການກິນ ແລະ ດື່ມ.
3. ໃຫ້ເດັກຝຶກປະຕິບັດການຈັບບ່ວງ, ຈັບຈອກ ແລະ ວາງຖ້ວຍ.
4. ໃຫ້ເດັກເວົ້າຄືນກ່ຽວກັບການປະຕິບັດຕົນໃນການກິນ ແລະ ດື່ມ.
5. ສຶກສາອົບຮົມເດັກ ກ່ຽວກັບການໃຊ້ບ່ວງຕັກອາຫານ ບໍ່ໃຫ້ຕົກເຮັ່ຍ ແລະ ບໍ່ໃຫ້ເປື້ອນປາກ, ຈັບຈອກຖືກວິທີ, ບໍ່ໃຫ້ນໍ້າເຮ່ຍ ແລະ ການເກັບມ້ຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດການປະຕິບັດຕົນໃນການກິນ ແລະ ດື່ມ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຈ້ຳເມັດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຈ້ຳເມັດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຈ້ຳເມັດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງ.

## III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຈ້ຳເມັດເສັ້ນຊື່ແຕ່ລຸ່ມຂຶ້ນເທິງ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດີດນິ້ວມື.
2. ຄູແນະນຳ, ສາທິດການການຈ້ຳເມັດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈ້ຳເມັດເສັ້ນຊື່ ແຕ່ລຸ່ມຂຶ້ນເທິງ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ.

### III. ສື່ການຮຽນ-ການສອນ

ຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຢືນຄ້ຳແອວກົ້ມລົງ, ເງີຍຂຶ້ນ ແລະ ເດ່ຂາໄປທາງໜ້າ.
2. ຄູແນະນຳການຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນຕະລູດ, ໂອ້ນຊາ ແລະ ເດື່ອງດ່າງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນເກມຕໍ່ຮູບພາບ ຕາມແບບຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍກິນອາຫານ.

## III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍກິນອາຫານ.
2. ບົດເພງ ອາຫານດີມີປະໂຫຍດ.
3. ເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍຍິງ ແລະ ຊາຍ ແຕ່ງຕົວ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ອາຫານດີມີປະໂຫຍດ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຖ້າ, ການແບ່ງປັນ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມສິລະປະສ້າງສັນ: ຂີດຂຽນຕາມຮອຍຈໍ້າຕົວເລກ 1.
2. ການຫຼິ້ນໃນມຸມບົດບາດສົມມຸດ: ຫຼິ້ນປຸງແຕ່ງອາຫານ.

### III. ສື່ການຮຽນ-ການສອນ

1. ສໍ ແລະ ປື້ມບົດເຝິກຫັດລະບົດສາດ ເຫຼັ້ມ 1 ຫຼື ເຈ້ຍຮອຍຈໍ້າຕົວເລກ 1.
2. ບັດເຂົ້າມຸມຫຼິ້ນ.
3. ບົດເພງ ອາຫານດີມີປະໂຫຍດ.
4. ເຄື່ອງຫຼິ້ນຂອງເຮືອນນ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ອາຫານດີມີປະໂຫຍດ.
2. ຄູແນະນຳວິທີຫຼິ້ນຕາມມຸມສິບະປະສ້າງສັນ, ມຸມບົດບາດສົມມຸດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງ ຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົບດາດສົມມຸດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ  ນຸ່ງເຄື່ອງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ  ນຸ່ງເຄື່ອງ.
3. ການບໍລິຫານຫົວເຂົ່າ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຫົວເຂົ່າ.
2. ໃຫ້ເດັກແລ່ນເປັນວົງມົນຕາມເຄາະຊ້າ, ໄວ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ນຸ່ງເຄື່ອງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງລ້າງມື.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ມ້ຽນເຄື່ອງນອນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ມ້ຽນເຄື່ອງນອນດ້ວຍຕົນເອງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການມ້ຽນເຄື່ອງນອນ: ພັບໃຫ້ເປັນລະບຽບ ແລະ ມ້ຽນໃຫ້ຖືກບ່ອນທີ່ກຳນົດ.

### III. ສື່ການຮຽນ-ການສອນ

ເຄື່ອງນອນເດັກນ້ອຍ: ຜ້າປູບ່ອນ, ຜ້າຫົ່ມ ແລະ ໝອນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບເຄື່ອງນອນຂອງເດັກ.
2. ຄູສົນທະນາກັບເດັກ ກ່ຽວກັບການເກັບມ້ຽນເຄື່ອງນອນ.
3. ຄູສາທິດການພັບ ແລະ ເກັບມ້ຽນເຄື່ອງນອນ.
4. ໃຫ້ເດັກເຝິກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເກັບມ້ຽນເຄື່ອງນອນ.
6. ສຶກສາອົບຮົມເດັກ ກ່ຽວກັບການມ້ຽນເຄື່ອງນອນໄວ້ໃຫ້ຖືກບ່ອນ ຫຼັງຈາກຕື່ນນອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການມ້ຽນເຄື່ອງນອນດ້ວຍຕົນເອງ.
2. ຄວາມເອົາໃຈໃສ່ໃນການເຝິກປະຕິບັດຕົວຈິງ ແລະ ຄວາມສາມັກຄີ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ປັ້ນດິນເປັນໜ່ວຍມົນ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນໜ່ວຍມົນ.

### III. ສື່ການຮຽນ-ການສອນ

ດິນປັ້ນ, ຜ້າຢາງ ຫຼື ເຈ້ຍຮອງ, ຊາມນ້ຳ, ສະບູ, ຜ້າເຊັດມື ແລະ ໂອ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດີດນີ້ວມື.
2. ຄູແນະນຳ, ສາທິດການປັ້ນດິນເປັນໜ່ວຍມົນ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ກ່ຽວກັບການແບ່ງປັນ, ການເກັບມ້ຽນ ແລະ ລ້າງມື.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມສາມາດໃນການປັ້ນດິນເປັນໜ່ວຍມົນ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ລູ່ລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ລູ່ລີ່ເຂົ້າສານ.
2. ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຢືນຄ້ຳແອວກົ້ມລົງ, ເງີຍຂຶ້ນ ແລະ ເດ່ຂາໄປທາງໜ້າ.
2. ຄູແນະນຳ ແລະ ສາທິດການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ເດັກນ້ອຍມ້ຽນເຄື່ອງນອນ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍມ້ຽນເຄື່ອງນອນ.
2. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ ກິນອາຫານ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການເກັບມ້ຽນເຄື່ອງນອນ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກໍາການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສໍາຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສໍາຜັດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນພໍ່, ແມ່ປ້ອນອາຫານ ແລະ ແຕ່ງຕົວໃຫ້ລູກ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສໍາຜັດ: ຫຼິ້ນຕໍ່ບຼັອກເປັນຮູບຕ່າງໆ ຕາມໃຈ.

### III. ສື່ການຮຽນ-ການສອນ

1. ຖ້ວຍ, ບ່ວງ, ຈອກ, ເຄື່ອງນຸ່ງ, ຫວີ, ແວ່ນ, ຢາງມັດຜົມ, ແປ້ງ ແລະ ຕຸກກະຕາ.
2. ບັດເຂົ້າມຸມຫຼິ້ນ.
3. ບຼັອກ.

### IV. ກິດຈະກໍາການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການກິນອາຫານ ແລະ ການແຕ່ງຕົວ.
2. ຄູແນະນໍາວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມເຄື່ອງຫຼິ້ນສໍາຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສໍາຜັດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຄຳສັ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດເຮັດທ່າທາງຕາມຄຳສັ່ງ ຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຄຳສັ່ງ: ຊັກເຄື່ອງ, ຕາກເຄື່ອງ ແລະ ພັບເຄື່ອງ

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແອວ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແອວ.
2. ໃຫ້ເດັກຍ່າງເປັນຄູ່ຕາມບາດເຄາະຊ້າ, ໄວ.
3. ຄູສາທິດການເຮັດທ່າທາງຕາມຄຳສັ່ງ: ຊັກເຄື່ອງ, ຕາກເຄື່ອງ ແລະ ພັບເຄື່ອງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງລົມພັດໃບໄມ້.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພໃນເວລາເຮັດທ່າທາງຕາມຄຳສັ່ງ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງຕາມຄຳສັ່ງ ຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ມ້ຽນເຄື່ອງໃຊ້ຕົນເອງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດມ້ຽນ ເຄື່ອງໃຊ້ປະຈຳຕົວ ແລະ ເຄື່ອງຫຼິ້ນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການເກັບມ້ຽນເຄື່ອງໃຊ້ປະຈຳຕົວ ແລະ ເຄື່ອງຫຼິ້ນ: ແປງຖູແຂ້ວ, ຢາສີແຂ້ວ, ຖົງປີ້ມ, ສໍ, ເກີບ, ເຄື່ອງນຸ່ງ, ລົດນ້ອຍ, ໝາກບານ ແລະ ຕຸກກະຕາ ໄວ້ໃນບ່ອນທີ່ກຳນົດ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ນຸ່ງເຄື່ອງ.
2. ເຄື່ອງໃຊ້ປະຈຳຕົວເດັກ ແລະ ເຄື່ອງຫຼິ້ນ: ແປງຖູແຂ້ວ, ຢາສີແຂ້ວ, ຖົງປີ້ມ, ສໍ, ເກີບ, ເຄື່ອງນຸ່ງ, ລົດນ້ອຍ, ໝາກບານ ແລະ ຕຸກກະຕາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ນຸ່ງເຄື່ອງ ປະກອບທ່າທາງ.
2. ຄູສົນທະນາກັບເດັກ ກ່ຽວກັບການເກັບມ້ຽນເຄື່ອງໃຊ້ ແລະ ເຄື່ອງຫຼິ້ນ.
3. ຄູແນະນຳການເກັບມ້ຽນເຄື່ອງໃຊ້.
4. ໃຫ້ເດັກຝຶກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເກັບມ້ຽນເຄື່ອງໃຊ້ປະຈຳຕົວ ແລະ ເຄື່ອງຫຼິ້ນ.
6. ສຶກສາອົບຮົມເດັກ ກ່ຽວກັບການເກັບມ້ຽນເຄື່ອງໃຊ້ປະຈຳຕົວ  ແລະ ເຄື່ອງຫຼິ້ນໄວ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການເກັບມ້ຽນເຄື່ອງໃຊ້ປະຈຳຕົວ ແລະ ເຄື່ອງຫຼິ້ນ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ທາສີໃສ່ຮູບພາບມື ບໍ່ໃຫ້ອອກນອກຂອບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການທາສີໃສ່ຮູບພາບມື ບໍ່ໃຫ້ອອກນອກຂອບ.

### III. ສື່ການຮຽນ-ການສອນ

1. ສໍສີໄມ້ ຫຼື ສີທຽນ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມທີ 1 ຫຼື ເຈ້ຍແບບຮູບພາບມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງທາສີ ດ້ວຍມືເປົ່າຢູ່ກັບພື້ນ.
2. ຄູແນະນຳ, ສາທິດການທາສີໃສ່ຮູບພາບມື ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການອະນາໄມມື ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ

1. ຄວາມຖືກຕ້ອງໃນການທາສີໃສ່ຮູບພາບມື ບໍ່ໃຫ້ອອກນອກຂອບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນປະດິດສ້າງ ນ້ຳຂຶ້ນ, ນ້ຳລົງ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນບົດຫຼິ້ນປະດິດສ້າງ ນ້ຳຂຶ້ນ, ນ້ຳລົງ.

### III. ສື່ການຮຽນ-ການສອນ

ສໍຂາວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກລຽນແຖວຢ່າງຕາມສຽງນັບ 1-2.
2. ຄູແນະນຳ ແລະ ສາທິດການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ.
5. ສຶກສາອົບຮົມເດັກ ກ່ຽວກັບການຫຼິ້ນແບບຫຼິ້ນ ນ້ຳຂຶ້ນ, ນ້ຳລົງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ນ້ຳຂຶ້ນ, ນ້ຳລົງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນເກມຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ ມ້ຽນປື້ມ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍ ມ້ຽນປື້ມ.
2. ເກມເກົ່າ ເກມຕໍ່ຮູບພາບ: ເດັກນ້ອຍມ້ຽນເຄື່ອງນອນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການມ້ຽນເຄື່ອງນອນ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້:  ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຫຼິ້ນໄມ້ບູ້ອກ.
2. ການຫຼິ້ນໃນມຸມເກມການສຶກສາ: ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍມ້ຽນປື້ມ.

## III. ສື່ການຮຽນ-ການສອນ

1. ໄມ້ບູ້ອກ.
2. ເກມຕໍ່ຮູບພາບ: ເດັກນ້ອຍຍິງ ແລະ ຊາຍມ້ຽນປື້ມ.
3. ບັດເຂົ້າມຸມຫຼິ້ນ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການຫຼິ້ນໃນມຸມ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ເອກະສານອ້າງອີງ

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ


1. ປື້ມຄູ່ມືການຈັດກິດຈະກຳການສອນຊັ້ນອະນຸບານ ກະຊວງສຶກສາທິການ, ກົມສາມັນ ເດືອນ ມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
2. ປື້ມຫຼັກການສອນອະນຸບານ ກຸ່ມວິຊາຄູທົ່ວໄປ ສາຍສ້າງຄູອະນຸບານລະບົບ 2 ປີ ປີທີ 1 ປີ 2008.
3. ປື້ມວິທີສອນກາຍະສຶກສາ ກຸ່ມວິທີສອນສາຍສ້າງຄູອະນຸບານລະບົບ 2 ປີ ປີທີ 2 ປີ 2009.
4. ປື້ມແຜນຈັດປະສົບການຊັ້ນອະນຸບານ1 ກະຊວງສຶກສາທິການ, ກົມສາມັນ ເດືອນມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
5. ຄູ່ມືຄູພະລະສຶກສາ, ຫັດຖະກຳ, ສິລະປະກຳ, ສິລະປະດົນຕີຊັ້ນປະຖົມ ປີທີໜຶ່ງ ກະຊວງສຶກສາທິການ, ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ.


## ກິດຈະກຳວົງມົນ


6. ຄູ່ມືຄູການຈັດກິດຈະກຳການຮຽນ-ການສອນ ຊັ້ນອະນຸບານກົມສາມັນສຶກສາ ກະຊວງສຶກສາທິການ.
7. ຫຼັກການສອນເດັກກ່ອນໄວຮຽນລະບົບ 11+3 ກະຊວງສຶກສາທິການ ປີ 2008.


## ກິດຈະກຳສິລະປະສ້າງສັນ


8. ຄູ່ມືຄູກິດຈະກຳສ້າງສັນ (ສິລະປະສຶກສາ) ຊັ້ນອະນຸບານ ປີ 1992.
9. ກະຊວງສຶກສາທິການ, ກົມສາມັນສຶກສາຄູ່ມືຄູກິດຈະກຳການສອນ ຊັ້ນອະນຸບານ ປີ 2005.
10. ກະຊວງສຶກສາທິການ, ປື້ມຫຼັກການສອນອະນຸບານ ລະບົບ 11+2 ປີ 2008 (ໜ້າ 93).


## ກິດຈະກຳການຫຼິ້ນກາງແຈ້ງ


11. ຄູ່ມືຄູ ກິດຈະກຳກາງແຈ້ງ ຊັ້ນອະນຸບານ ກະຊວງສຶກສາ ປີ 1990.
12. ຄູ່ມືຄູ ກິດຈະກຳການສອນ ຊັ້ນອະນຸບານ ກະຊວງສຶກສາ ປີ 1990 ໜ້າທີ 102,105,106,131.
13. ປື້ມແບບຮຽນວິຊາຫຼັກການສອນເດັກກ່ອນໄວຮຽນ ລະບົບ 11+2 ກົມສ້າງຄູ, ກະຊວງສຶກສາທິການ ປີ 2004 (ບົດທີ 11 ກິດຈະກຳກາງແຈ້ງ).


## ກິດຈະກຳເກມການສຶກສາ


14. ປື້ມແຜ່ນຈັດປະສົບການ ຊັ້ນອະນຸບານ 1 ເຫຼັ້ມ 1, ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ).
15. ປື້ມວິຊາ: ຫຼັກການສອນ 11 + 3 ສົກຮຽນ 2008 (ກະຊວງສຶກສາທິການ-ກົມສ້າງຄູ).


## ກິດຈະກຳການຫຼິ້ນຕາມມຸມ


16. ປື້ມ ວິຊາຊອກຮູ້ສະພາບແວດລ້ອມ 11 + 3 ປີ 2008 (ກະຊວງສຶກສາທິການ-ກົມສ້າງຄູ).
17. ປື້ມ ແຜນຈັດປະສົບການຊັ້ນອະນຸບານ 1 ເຫຼັ້ມ 1 ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ).
18. ປື້ມ ການພັດທະນາໂຮງຮຽນຄຸນນະພາບ, ຄູ່ມື ຄູສອນຫ້ອງກຽມປະຖົມ (ກະຊວງສຶກສາ 2010).